

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ນະໂຍບາຍອຸດສາຫະກຳສີຂຽວ

ນະຄອນຫຼວງວຽງຈັນ 2022

ສາລະບານ

ຄຳນຳ.....1
ພາກທີ I ແນວຄວາມຄິດກ່ຽວກັບນະໂຍບາຍອຸດສາຫະກຳສີຂຽວ.....2
1. ອຸດສາຫະກຳປຸງແຕ່ງສີຂຽວ ເພື່ອຜະລິດຕະພັນສີຂຽວ.....2
2. ການພັດທະນາ ກ່ອນການປົກປັກຮັກສາສິ່ງແວດລ້ອມ (Growth First).....3
3. ການປົກປັກຮັກສາສິ່ງແວດລ້ອມ ກ່ອນການພັດທະນາ (Green First) 3
4. ການພັດທະນາຄຽງຄູ່ກັບການປົກປັກຮັກສາສິ່ງແວດລ້ອມ (Green and Growth).....3
5. ເປົ້າໝາຍ ແລະ ວັດຖຸປະສົງຂອງນະໂຍບາຍອຸດສາຫະກຳສີຂຽວ.....3
5.1. ເປົ້າໝາຍຂອງນະໂຍບາຍອຸດສາຫະກຳສີຂຽວ.....4
5.2. ວັດຖຸປະສົງຂອງນະໂຍບາຍອຸດສາຫະກຳສີຂຽວ.....4
ພາກທີ II ອົງປະກອບຂອງອຸດສາຫະກຳສີຂຽວ.....5
1. ການປະຢັດພະລັງງານ.....5
2. ການນຳໃຊ້ນ້ຳຢ່າງມີປະສິດທິພາບ.....5
3. ການນຳໃຊ້ພະລັງງານທົດແທນ.....5
4. ການຫຼຸດຜ່ອນສິ່ງເສດເຫຼືອ.....5
5. ການປະຢັດວັດຖຸດິບ.....5
6. ການຫຼຸດຜ່ອນມົນລະພິດທາງອາກາດ.....5
7. ການຫຼຸດຜ່ອນມົນລະພິດທາງນ້ຳ.....6
8. ການຫຼຸດຜ່ອນມົນລະພິດທາງສຽງ.....6
9. ການສົ່ງເສີມນະວັດຕະກຳ ເພື່ອອະນຸລັກຊີວະນາໆພັນ.....6
10. ການຟື້ນຟູສິ່ງແວດລ້ອມໂຮງງານ.....6
11. ຜະລິດຕະພັນທີ່ເປັນມິດຕໍ່ສິ່ງແວດລ້ອມ.....6
12. ຕ່ອງໂສ້ການສະໜອງສີຂຽວ.....6
13. ການປະເມີນວົງຈອນຜະລິດຕະພັນ.....6
ພາກທີ III ສິ່ງທ້າທາຍ ແລະ ການລະໂອກາດການຫັນເປັນອຸດສາຫະກຳສີຂຽວ.....7
1. ສິ່ງທ້າທາຍ.....7
2. ການລະໂອກາດ.....8
2.1. ຫຼີກລ່ຽງການເຮັດໃຫ້ສິ່ງແວດລ້ອມເສື່ອມໂຊມ.....8
2.2. ໃຊ້ຊັບພະຍາກອນ ແລະ ພະລັງງານທີ່ມີປະສິດທິພາບ.....8
2.3. ປັບປຸງປະສິດທິພາບ ແລະ ຄວາມສາມາດໃນການແຂ່ງຂັນໂດຍນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ.....9
2.4. ປັບປຸງລະບົບນິເວດດ້ານສີມືແຮງງານ ແລະ ການຈ້າງງານ.....9

2.5. ເສີມສ້າງລະບົບນິເວດດ້ານພະລັງງານທົດແທນ.....10
2.6. ການຮ່ວມມືສາກົນ.....10
ພາກທີ IV ກົນໄກການຜັນຂະຫຍາຍນະໂຍບາຍອຸດສາຫະກຳສີຂຽວ.....10
1. ການເຊື່ອມສານກອບນະໂຍບາຍ 10
2. ສະພາບແວດລ້ອມທີ່ເອື້ອອຳນວຍ.....11
3. ມາດຕະຖານ ແລະ ແຜນການຈັດຕັ້ງປະຕິບັດ.....11
4. ແຫຼ່ງທຶນ ແລະ ການສ້າງຄວາມຕ້ອງການ.....11
5. ການແບ່ງປັນຄວາມຮູ້ ແລະ ນະວັດຕະກຳໃໝ່.....12
6. ເຄື່ອງມືດ້ານນະໂຍບາຍ 12
6.1. ການຢັ້ງຢືນອຸດສາຫະກຳສີຂຽວ.....12
6.2. ລະບົບການຕິດຕາມດ້ານສິ່ງແວດລ້ອມ.....13
6.3. ພາສີ ແລະ ຄ່າທຳນຽມດ້ານສິ່ງແວດລ້ອມ.....13
6.4. ເຄື່ອງມືອື່ນໆ.....14
7. ການຕິດຕາມກວດກາ ແລະ ປະເມີນຜົນ.....14
ເອກະສານອ້າງອີງ.....15

ຄຳນຳ

ເພື່ອເປັນການຜັນຂະຫຍາຍ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ກ່ຽວກັບການຫຼຸດຜ່ອນການເພິ່ງພາການຂຸດຄົ້ນຊັບພະຍາກອນທຳມະຊາດ, ສິ່ງເສີມຄວາມຫຼາກຫຼາຍທາງດ້ານເສດຖະກິດ ແລະ ການສ້າງແຮງຈູງໃຈລົງທຶນໃນຂະແໜງການທີ່ມີທ່າແຮງດ້ານການເຕີບໂຕສີຂຽວ. ບັນດາອຸດສາຫະກຳຂະໜາດນ້ອຍ ແລະ ກາງ ຈະຖືກຊຸກຍູ້ໃຫ້ມີການພັດທະນາໄປຕາມທິດສີຂຽວ ແລະ ຍືນຍົງ ໂດຍວິທີການນຳໃຊ້ຊັບພະຍາກອນທຳມະຊາດ ແລະ ພະລັງງານຢ່າງມີປະສິດທິພາບ, ຫຼຸດຜ່ອນການສ້າງສິ່ງເສດເຫຼືອ ແລະ ເປັນມິດຕໍ່ສິ່ງແວດລ້ອມ.

ນະໂຍບາຍອຸດສາຫະກຳສີຂຽວສຳລັບ ສປປ ລາວ ສະບັບນີ້ ໄດ້ຜັນຂະຫຍາຍມາຈາກ ແຜນຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ເຖິງປີ 2030 ໂດຍສອດຄ່ອງກັບ ຍຸດທະສາດການຄຸ້ມຄອງການປ່ຽນແປງດິນຟ້າອາກາດແຫ່ງຊາດ ວິໄສທັດ ຮອດປີ 2050, ຍຸດທະສາດ ແລະ ແຜນດຳເນີນງານ ຮອດປີ 2030 ແລະ ວິໄສທັດຂອງຂະແໜງອຸດສາຫະກຳ ແລະ ການຄ້າ ເພື່ອພັດທະນາອຸດສາຫະກຳປຸງແຕ່ງ ແລະ ການຄ້າ ໃຫ້ກ້າວໄກ ທັນເປັນອຸດສາຫະກຳ ແລະ ທັນສະໄໝ ຕາມທິດສີຂຽວ ແລະ ຍືນຍົງ ໃນຍຸກແຫ່ງປັນຍາປະດິດ, ອຸດສາຫະກຳ 4.0 ແລະ ເສດຖະກິດດິຈິຕອນ.

ນະໂຍບາຍອຸດສາຫະກຳສີຂຽວ ຂອງ ສປປ ລາວ ຈະເປັນເຄື່ອງມືໜຶ່ງທີ່ສຳຄັນ ເພື່ອສະໜັບສະໜຸນຂະແໜງອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໄປຕາມທິດທາງການຜະລິດທີ່ສະອາດຂຶ້ນ ແລະ ເສີມສ້າງຄວາມສາມາດໃນການແຂ່ງຂັນ. ນະໂຍບາຍດັ່ງກ່າວນີ້ ແມ່ໃສ່ການພັດທະນາບັນດາອົງປະກອບທີ່ສຳຄັນຂອງການຜະລິດ ເຊິ່ງຈະສົ່ງເສີມໃຫ້ບັນດາຜູ້ປະກອບການ ໃຫ້ມີການຫັນປ່ຽນຕາມທິດສີຂຽວ ແລະ ຍືນຍົງ ເປັນຕົ້ນ ຕ່ອງໂສ້ການສະໜອງ, ແຫຼ່ງວັດຖຸດິບ, ແຫຼ່ງພະລັງງານ, ການຄຸ້ມຄອງສິ່ງເສດເຫຼືອ. ນອກຈາກນີ້ ນະໂຍບາຍສະບັບນີ້ ຍັງຊີ້ໃຫ້ເຫັນເຖິງບັນດາສິ່ງທ້າທາຍ ທີ່ສາມາດຄາດຄະເນໄດ້ ແລະ ທີ່ສຳຄັນກໍຄື ການໂອກາດທີ່ຈະສາມາດຍົກລະດັບບັນດາໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໃຫ້ພັດທະນາໄປຕາມທິດສີຂຽວ ແລະ ຍືນຍົງ. ນະໂຍບາຍສະບັບນີ້ ຍັງຊ່ວຍກຳນົດທິດທາງການຈັດຕັ້ງປະຕິບັດຢ່າງເປັນຮູບປະທຳ ເຊັ່ນ: ການເຊື່ອມສານເຂົ້າກັບຍຸດທະສາດອື່ນໆ ຂອງລັດຖະບານ, ການສ້າງສະພາບແວດລ້ອມທີ່ເອື້ອອຳນວຍຕໍ່ການພັດທະນາ ແລະ ການນຳສະເໜີໃຫ້ເຫັນບັນດາເຄື່ອງມືດ້ານນະໂຍບາຍຕ່າງໆ ທີ່ຈະຊ່ວຍໃຫ້ຂະແໜງການອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ຫັນໄປຕາມທິດສີຂຽວ ແລະ ຍືນຍົງ. ໃນຕໍ່ໜ້າ ນະໂຍບາຍສະບັບນີ້ ຈະໄດ້ຮັບການສົ່ງເສີມ ໂດຍການກຳນົດເຂົ້າໃນແຜນງານຈັດຕັ້ງປະຕິບັດ, ບັນດານິຕິກຳ, ຄູ່ມື ແລະ ມາດຕະຖານເຕັກນິກອື່ນໆ ທີ່ກ່ຽວຂ້ອງ.

ນະໂຍບາຍອຸດສາຫະກຳສີຂຽວສຳລັບ ສປປ ລາວ ສະບັບນີ້ ປະກອບມີ 4 ພາກໃຫຍ່ ຄື: ພາກທີ I ແນວຄວາມຄິດກ່ຽວກັບນະໂຍບາຍອຸດສາຫະກຳສີຂຽວ, ພາກທີ II ອົງປະກອບຂອງອຸດສາຫະກຳສີຂຽວ, ພາກທີ III ສິ່ງທ້າທາຍ ແລະ ການໂອກາດຂອງການຫັນເປັນອຸດສາຫະກຳສີຂຽວ ແລະ ພາກທີ IV ກົນໄກການຜັນຂະຫຍາຍນະໂຍບາຍອຸດສາຫະກຳສີຂຽວ.

ຂ້າພະເຈົ້າຂໍສະແດງຄວາມຂອບໃຈຢ່າງສູງມາຍັງ ກົມອຸດສາຫະກຳ ແລະ ຫັດຖະກຳ, ສະຖາບັນເຕີບໂຕສີຂຽວສາກົນ ປະຈຳ ສປປ ລາວ (GGGI) ແລະ ກອງທຶນສິ່ງແວດລ້ອມໂລກ (GEF), ພາກສ່ວນທີ່ກ່ຽວຂ້ອງທັງພາກລັດ ແລະ ພາກທຸລະກິດ ທີ່ໄດ້ປະກອບສ່ວນເຂົ້າໃນການສ້າງນະໂຍບາຍອຸດສາຫະກຳສີຂຽວ ສຳລັບ ສປປ ລາວ. ນະໂຍບາຍອຸດສາຫະກຳສີຂຽວສຳລັບ ສປປ ລາວ ສະບັບນີ້ ຈະເປັນບ່ອນອີງ ໃຫ້ແກ່ການຈັດຕັ້ງປະຕິບັດວຽກງານອຸດສາຫະກຳສີຂຽວໃຫ້ບັນລຸຕາມຈຸດປະສົງ ແລະ ຄາດໝາຍທີ່ວາງໄວ້ ເພື່ອປະກອບສ່ວນເຂົ້າໃນການສົ່ງເສີມ ແລະ ພັດທະນາ ວຽກງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ກໍຄືການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃຫ້ຂະຫຍາຍຕົວ ຕາມທິດສົມດຸນ, ສີຂຽວ ແລະ ຍືນຍົງ.

ລັດຖະມົນຕີ

ມະໄລທອງ ກົມມະສິດ

ພາກທີ I
ແນວຄວາມຄິດກ່ຽວກັບນະໂຍບາຍອຸດສາຫະກຳສີຂຽວ

ໃນເສດຖະກິດສາກົນ ການຈະເລີນເຕີບໂຕທາງດ້ານຜະລິດຕະພາບ ມີຄວາມຈຳເປັນ ເພື່ອເພີ່ມມາດຕະຖານການດຳລົງຊີວິດ ແລະ ປົກປັກຮັກສາຄວາມສາມາດໃນການແຂ່ງຂັນ. ສິ່ງດັ່ງກ່າວ ໝາຍເຖິງການຍາດແຍ່ງເພື່ອຊອກຫາວິທີການດຳເນີນທຸລະກິດທີ່ມີປະສິດທິພາບພາຍໃນຂະແໜງການ ພ້ອມທັງເລັ່ງການຫັນປ່ຽນດ້ານໂຄງສ້າງໃນທົ່ວທຸກຂົງເຂດ ໂດຍການເຄື່ອນຍ້າຍທຶນຮອນ ແລະ ແຮງງານ ຈາກບັນດາກິດຈະກຳທີ່ມີຜະລິດຕະພາບຕ່ຳໄປຫາສູງ. ປັດຈຸບັນ ມີສອງແຮງຈູງໃຈຫຼັກສຳລັບລັດຖະບານ ແລະ ສັງຄົມ ເພື່ອຊຸກຍູ້ທິດທາງການຫັນປ່ຽນດ້ານໂຄງສ້າງໃນເສດຖະກິດ ເຊັ່ນ:

- ແຮງຈູງໃຈທີໜຶ່ງ ແມ່ນການປັບປຸງເສດຖະກິດ, ໃນບົດສຳຫຼວດລາຍຈ່າຍ ແລະ ການບໍລິໂພກຂອງລາວ ປີ 2018-2019 ໄດ້ຊີ້ໃຫ້ເຫັນວ່າ ເຖິງແມ່ນວ່າ ອັດຕາຄວາມທຸກຍາກແຫ່ງຊາດຫຼຸດລົງ 6,3% ໃນ ໄລຍະ 6 ປີ ຈາກ 24,6% ໃນປີ 2013 ມາເປັນ 18,3% ໃນປີ 2019, ແຕ່ມີຈຳນວນຫຼາຍກວ່າ 1 ໃນ 5 ຂອງປະຊາກອນ ຍັງຄົງມີລາຍຮັບຕ່ຳກວ່າອັດຕາຄວາມທຸກຍາກແຫ່ງຊາດ ປີ 2019 ຢູ່ທີ່ 9.364 ກີບ (1 ໂດລາສະຫະລັດ) ຕໍ່ມື້. ນອກນັ້ນ, ການຍົກລະດັບສີມືແຮງງານ ແລະ ເຄື່ອນຍ້າຍແຮງງານໄປສູ່ເສດຖະກິດທີ່ພົ້ນເດັ່ນແມ່ນມີຄວາມຈຳເປັນຫຼາຍ.
- ແຮງຈູງໃຈທີສອງ ແມ່ນການຈະເລີນເຕີບໂຕທາງດ້ານເສດຖະກິດທີ່ໄດ້ມາຈາກການຂຸດຄົ້ນຊັບພະຍາກອນທຳມະຊາດເກີນຂອບເຂດ. ການປັບປຸງກອບໜ້າວຽກດ້ານເຕັກນິກວິຊາການ ແລະ ການຈັດຕັ້ງ ແມ່ນຈຳເປັນໃນການແຍກເອົາການຈະເລີນເຕີບໂຕທາງດ້ານເສດຖະກິດ ແລະ ສະຫວັດດີການສັງຄົມ ອອກຈາກການຂາດເຂີນຊັບພະຍາກອນ ແລະ ການສ້າງສິ່ງເສດເຫຼືອ. ໃນຂະນະທີ່ພວກເຮົາມີເຕັກໂນໂລຊີອັນຈຳເປັນທີ່ຫຼາກຫຼາຍ, ສະນັ້ນ ແຮງຈູງໃຈທີ່ຈະຊ່ວຍໃນການຈັດສັນຊັບພະຍາກອນຕ້ອງຫັນປ່ຽນ ເພື່ອສະກັດກັ້ນເສັ້ນທາງເຕັກໂນໂລຊີທີ່ບໍ່ຍືນຍົງທີ່ມີຢູ່. ນອກນັ້ນ, ຄວນເນັ້ນໜັກດ້ານຜະລິດຕະພາບ ເພື່ອປັບປຸງປະສິດທິພາບໃນແຕ່ລະຂັ້ນ.

ການພັດທະນາອຸດສາຫະກຳສີຂຽວ ສາມາດຊຸກຍູ້ການຫັນປ່ຽນດ້ານໂຄງປະກອບເສດຖະກິດດັ່ງກ່າວລວມ ທັງຍຸດທະສາດການອະນຸລັກສິ່ງແວດລ້ອມ ທີ່ກວມເອົາການປັບປຸງປະສິດທິພາບດ້ານພະລັງງານ, ນ້ຳ, ສິ່ງເສດເຫຼືອ, ແລະ ການປັບປຸງປະສິດທິພາບໂດຍອີງໃສ່ພື້ນຖານວັດຖຸດິບ ແລະ ຜົນປະໂຫຍດຮ່ວມຂອງສັງຄົມ ເຊັ່ນ: ການປັບປຸງສີມືແຮງງານ ແລະ ການສ້າງວຽກເຮັດງານທຳ.

1. ອຸດສາຫະກຳປຸງແຕ່ງສີຂຽວ ເພື່ອຜະລິດຕະພັນສີຂຽວ

ໃນລະດັບສາກົນ ຄວາມຕ້ອງການຜະລິດຕະພັນສີຂຽວທີ່ມີການປ່ອຍທາດອາຍເຮືອນແກ້ວຕ່ຳແມ່ນເພີ່ມຂຶ້ນ ຈຶ່ງມີຄວາມຈຳເປັນຕ້ອງເຂົ້າໃຈຂະບວນການຜະລິດຂອງຜະລິດຕະພັນສີຂຽວ ແລະ ຂະແໜງເສດຖະກິດທີ່ສາມາດຖືກຈັດປະເພດເປັນສີຂຽວ.

ຂະແໜງອຸດສາຫະກຳ ທີ່ຖືກຈັດວ່າເປັນ "ສີຂຽວ" ໂດຍອີງໃສ່ປະສິດທິພາບທີ່ດີກວ່າລະດັບສະເລ່ຍເຂົ້າໃນດ້ານຄຸນນະພາບສິ່ງແວດລ້ອມໄດ້ ເຊິ່ງອາດບໍ່ຖືກຕາມຄວາມໝາຍຂອງສາກົນ ກ່ຽວກັບ ອຸດສາຫະກຳສີຂຽວ. ຜະລິດຕະພັນ ຫຼື ການບໍລິການສີຂຽວ ສາມາດເກີດມາຈາກຂະບວນການຜະລິດທີ່ບໍ່ມີຄວາມຍືນຍົງ ເຊັ່ນ: ການກໍ່ສ້າງລະບົບກັ້ງຫັນລົມ ໂດຍນຳໃຊ້ວິທີການທີ່ເຮັດໃຫ້ເກີດການປ່ອຍທາດອາຍກາກບອນຈຳນວນຫຼາຍ ແລະ ຂະບວນການຜະລິດສີຂຽວທີ່ສ້າງຜະລິດຕະພັນ ຫຼື ການບໍລິການທີ່ບໍ່ເປັນມິດກັບສິ່ງແວດລ້ອມ ເຊັ່ນ: ການຜະລິດລົດທີ່ໃຊ້ນ້ຳມັນເຊື້ອໄຟ ທີ່ຫຼຸດຜ່ອນການໃຊ້ນ້ຳລົງ. ດັ່ງນັ້ນ, ຈຶ່ງມີຄວາມຈຳເປັນທີ່ຈະຕ້ອງແຍກໃຫ້ເຫັນຢ່າງຈະແຈ້ງລະຫວ່າງ ຜົນກະທົບດ້ານສິ່ງແວດລ້ອມ ທີ່ເກີດຈາກຂະບວນການຜະລິດ ແລະ ເກີດຈາກຜະລິດຕະພັນ ພ້ອມ

ທັງຊີ້ໃຫ້ເຫັນຄວາມສຳຄັນຂອງຂະບວນການຜະລິດດ້ານອຸດສາຫະກຳທີ່ເປັນມິດກັບສິ່ງແວດລ້ອມຫຼາຍຂຶ້ນ.

2. ການພັດທະນາ ກ່ອນການປົກປັກຮັກສາສິ່ງແວດລ້ອມ (Growth First)

ການພັດທະນາເສດຖະກິດ-ສັງຄົມມີຄວາມສຳຄັນຫຼາຍ ແນໃສ່ສ້າງລາຍຮັບ ແລະ ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ ໂດຍລັດຖະບານຫຼາຍປະເທດໄດ້ສຸມໃສ່ພັດທະນາເສດຖະກິດໃຫ້ຂະຫຍາຍຕົວ ແລະ ຈະເລີນຮຸ່ງເຮືອງ ກ່ອນການປົກປັກຮັກສາສິ່ງແວດລ້ອມ. ໝາຍຄວາມວ່າລັດຖະບານຈະໃຫ້ຄວາມສຳຄັນໃນດ້ານການພັດທະນາເສດຖະກິດ ແລະ ສັງຄົມ ໃຫ້ເຂັ້ມແຂງກ່ອນ ແລ້ວຈຶ່ງຄ່ອຍນຳງົບປະມານທີ່ມີມາຟື້ນຟູສິ່ງແວດລ້ອມ ແລະ ນິເວດວິທະຍາໃຫ້ກັບຄືນສູ່ສະພາບທີ່ດີຕາມຫຼັງ. ນະໂຍບາຍນີ້ ແນໃສ່ອຳນວຍຄວາມສະດວກເພື່ອດຶງດູດການລົງທຶນໃສ່ການຜະລິດສິນຄ້າ ເພື່ອຈຳໜ່າຍພາຍໃນ ແລະ ສົ່ງອອກ ໃຫ້ເພີ່ມຂຶ້ນ ແຕ່ລະບຽບກົດໝາຍດ້ານສິ່ງແວດລ້ອມຈະມີລັກສະນະໂຍຍານ ເພື່ອຫຼຸດຜ່ອນຄ່າໃຊ້ຈ່າຍຂອງນັກລົງທຶນ. ແຕ່ພາຍຫຼັງເສດຖະກິດຂະຫຍາຍຕົວສູງ ແລະ ປະຊາຊົນຮັ່ງມີແລ້ວ ຈະເລີ່ມມີນະໂຍບາຍດ້ານສິ່ງແວດລ້ອມທີ່ເຂັ້ມງວດ ແນໃສ່ປົວແປງສິ່ງແວດລ້ອມໃຫ້ດີຂຶ້ນ.

3. ການປົກປັກຮັກສາສິ່ງແວດລ້ອມ ກ່ອນການພັດທະນາ (Green First)

ຄວາມເປັນຈິງ ມີຫຼາຍປະເທດນຳໃຊ້ນະໂຍບາຍປົກປັກຮັກສາສິ່ງແວດລ້ອມ ຫຼາຍກວ່າການສົ່ງເສີມການພັດທະນາເສດຖະກິດທີ່ບໍ່ເປັນລະບົບ ໂດຍສະເພາະປະເທດທີ່ພັດທະນາແລ້ວ ແລະ ປະຊາຊົນມີຊີວິດການເປັນຢູ່ທີ່ດີ. ສະນັ້ນ, ເພື່ອຮັບປະກັນບໍ່ໃຫ້ມີຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຕ່ຳການດຳເນີນທຸລະກິດ ຫຼື ມີຜົນກະທົບໜ້ອຍທີ່ສຸດ ລັດຖະບານຈະວາງນະໂຍບາຍດ້ານສິ່ງແວດລ້ອມຢ່າງເຂັ້ມງວດ ແລະ ຈະມີການເລືອກເຟັ້ນເອົາບັນດາບໍລິສັດທີ່ໄດ້ມາດຕະຖານທາງດ້ານສິ່ງແວດລ້ອມສູງ ເພື່ອດຳເນີນທຸລະກິດ ພ້ອມທັງມີມາດຕະການຕໍ່ກັບຫົວໜ່ວຍທຸລະກິດທີ່ບໍ່ປະຕິບັດຕາມມາດຕະຖານດ້ານການປົກປັກຮັກສາສິ່ງແວດລ້ອມຢ່າງເຂັ້ມງວດ.

4. ການພັດທະນາຄຽງຄູ່ກັບການປົກປັກຮັກສາສິ່ງແວດລ້ອມ (Green and Growth)

ໃນປະຈຸບັນນີ້, ຫຼາຍປະເທດໄດ້ເລືອກນຳໃຊ້ນະໂຍບາຍການເຕີບໂຕການພັດທະນາທາງດ້ານເສດຖະກິດຄຽງຄູ່ກັບການປົກປັກຮັກສາສິ່ງແວດ ທັງນີ້ກໍ່ເພື່ອໃຫ້ມີຄວາມສົມດຸນກັນ ລະຫວ່າງ ຄວາມຈະເລີນຮັ່ງມີທາງດ້ານເສດຖະກິດ ແລະ ຍັງຄົງຮັກສາໄວ້ສິ່ງແວດລ້ອມ ແລະ ລະບົບນິເວດວິທະຍາໃຫ້ຢູ່ໃນລະດັບທີ່ດີພໍສົມຄວນ ແຕ່ກໍ່ປາສະຈາກບໍ່ໄດ້ການພັດທະນາເສດຖະກິດກໍ່ຕ້ອງມີຜົນກະທົບຕໍ່ສິ່ງແວດລ້ອມ.

ສຳລັບ ລັດຖະບານແຫ່ງ ສປປ ລາວ ໄດ້ເລືອກເອົາແນວທາງນະໂຍບາຍທີ່ສົ່ງເສີມການພັດທະນາເສດຖະກິດ-ສັງຄົມ ໄປຄຽງຄູ່ກັບນະໂຍບາຍການປົກປັກຮັກສາສິ່ງແວດລ້ອມ ຊຶ່ງສັງເກດເຫັນວ່າ ການພັດທະນາເສດຖະກິດຂອງ ສປປ ລາວ ກໍ່ຄ່ອຍໆ ເຂັ້ມແຂງຂຶ້ນເທື່ອລະກ້າວ ແລະ ສິ່ງແວດລ້ອມກໍ່ຍັງຄົງຮັກສາໄດ້ໃນລະດັບດີ.

5. ເປົ້າໝາຍ ແລະ ວັດຖຸປະສົງຂອງນະໂຍບາຍອຸດສາຫະກຳສີຂຽວ

ເປົ້າໝາຍ ແລະ ວັດຖຸປະສົງ ຂອງນະໂຍບາຍອຸດສາຫະກຳສີຂຽວ ເພື່ອເສີມສ້າງຄວາມຍືນຍົງດ້ານສິ່ງແວດລ້ອມ ພ້ອມທັງປະກອບສ່ວນເຂົ້າໃນການເຕີບໂຕ ແລະ ພັດທະນາດ້ານເສດຖະກິດ-ສັງຄົມໃນໄລຍະຍາວ. ຖ້າຫາກບັນລຸໄດ້ເປົ້າໝາຍ ແລະ ວັດຖຸປະສົງດັ່ງກ່າວ ການຫັນປ່ຽນດ້ານໂຄງປະກອບເສດຖະກິດກໍ່ຈະບັນລຸໄດ້ ແລະ ສິ່ງຜົນປະໂຫຍດອັນໃຫຍ່ຫຼວງຕໍ່ການຂະຫຍາຍຕົວຂອງຂະແໜງການອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ແລະ ເສດຖະກິດແຫ່ງຊາດ. ນະໂຍບາຍດັ່ງກ່າວມີບັນດາແຜນຍຸດທະສາດອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ທີ່ສ້າງແຮງຈູງໃຈໃຫ້ແກ່ອຸດສາຫະກຳສີຂຽວ ໃຫ້ມີການຂະຫຍາຍຕົວໄວຂຶ້ນ. ດັ່ງນັ້ນ, ອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ທີ່ມີຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຈະໄດ້ຮັບການສະໜັບສະໜູນ ເພື່ອປັບປຸງທຸລະກິດເຫຼົ່ານັ້ນໃຫ້ດີຂຶ້ນ.

5.1 ເປົ້າໝາຍຂອງນະໂຍບາຍອຸດສາຫະກຳສີຂຽວ

ນະໂຍບາຍອຸດສາຫະກຳສີຂຽວ ຂອງ ສປປ ລາວ ສະບັບນີ້ ແນໃສ່ຂະແໜງການອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ. ລັດຖະບານ ສປປ ລາວ ມີເປົ້າໝາຍ ເພື່ອເຊື່ອມໂຍງກັບບັນດາປະເທດ ທີ່ມີການພັດທະນາເສດຖະກິດ-ສັງຄົມ ແລະ ການປົກປັກຮັກສາສິ່ງແວດລ້ອມ ເພື່ອຊຸກຍູ້ການຂະຫຍາຍຕົວທາງດ້ານອຸດສາຫະກຳສີຂຽວ. ໂດຍຜ່ານການປະຕິບັດນະໂຍບາຍອຸດສາຫະກຳສີຂຽວ ສປປ ລາວ ພະຍາຍາມສ້າງພື້ນຖານໃນທຸກໆດ້ານ ເພື່ອ ໃຫ້ເກີດມາດຕະການດ້ານນະໂຍບາຍທີ່ມີປະສິດທິຜົນ ແລະ ສ້າງຜົນປະໂຫຍດດ້ານສິ່ງແວດລ້ອມ ແລະ ສັງຄົມທີ່ ສຳຄັນໃນທົ່ວປະເທດ. ການອະນຸລັກຊັບພະຍາກອນທຳມະຊາດ ແລະ ການຫຼຸດຜ່ອນມົນລະພິດ ຈະຊ່ວຍປັບປຸງ ຊີວິດການເປັນຢູ່ຂອງສັງຄົມຜ່ານຫຼາຍຊ່ອງທາງທີ່ອາດຈະເປັນປະໂຫຍດຕໍ່ທຸລະກິດໃນທາງອ້ອມ ເປັນຕົ້ນ ການ ເຂົ້າເຖິງນ້ຳສະອາດ ແລະ ອາກາດບໍລິສຸດກໍຈະເຮັດໃຫ້ແຮງງານມີສຸຂະພາບແຂງແຮງດີ ແລະ ສາມາດເພີ່ມປະສິດ ທິພາບຂອງຜົນການຜະລິດຫຼາຍຂຶ້ນ. ນະໂຍບາຍນີ້ ຄາດວ່າຈະຊ່ວຍປັບປຸງການຄຸ້ມຄອງຊັບພະຍາກອນທຳມະ ຊາດ, ເພີ່ມປະສິດທິພາບການຜະລິດ ແລະ ການຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ເຊິ່ງຈະປະກອບສ່ວນເຂົ້າໃນ ບັນດາເປົ້າໝາຍພັດທະນາແບບຍືນຍົງຂອງສະຫະປະຊາຊາດ (SDG) ດັ່ງລຸ່ມນີ້:

- **ເປົ້າໝາຍ 6**. ຮັບປະກັນຄວາມພ້ອມ ແລະ ການຄຸ້ມຄອງນ້ຳສະອາດ ແລະ ສຸຂາພິບານແບບຍືນຍົງສຳລັບ ທຸກຄົນ.
- **ເປົ້າໝາຍ 7**. ຮັບປະກັນການເຂົ້າເຖິງພະລັງງານທີ່ມີລາຄາບໍ່ແພງ, ເຊື່ອຖືໄດ້, ຍືນຍົງ ແລະ ທັນສະໄໝ ສຳລັບທຸກຄົນ.
- **ເປົ້າໝາຍ 8**. ການເຕີບໂຕທາງດ້ານເສດຖະກິດແບບຍືນຍົງ, ມີສ່ວນຮ່ວມ, ການຈ້າງງານເຕັມທີ່ ແລະ ມີຜົນຜະລິດ ແລະ ການເຮັດວຽກທີ່ເໝາະສົມສຳລັບທຸກຄົນ.
- **ເປົ້າໝາຍ 9**. ກໍ່ສ້າງພື້ນຖານໂຄງລ່າງທີ່ທົນທານ, ຊຸກຍູ້ການຫັນເປັນອຸດສາຫະກຳມີສ່ວນຮ່ວມ ແລະ ຍືນຍົງ ແລະ ຊຸກຍູ້ການປະດິດສ້າງ.
- **ເປົ້າໝາຍ 12**. ຮັບປະກັນຮູບແບບການບໍລິໂພກ ແລະ ການຜະລິດແບບຍືນຍົງ; ແລະ
- **ເປົ້າໝາຍ 13**. ປະຕິບັດຮີບດ່ວນ ເພື່ອຕ້ານການປ່ຽນແປງຂອງດິນຟ້າອາກາດ ແລະ ຜົນກະທົບຂອງ ມັນ.

5.2 ວັດຖຸປະສົງຂອງນະໂຍບາຍອຸດສາຫະກຳສີຂຽວ

ວັດຖຸປະສົງຂອງນະໂຍບາຍສະບັບນີ້ກຳນົດກອບໜ້າວຽກລວມ, ເປົ້າໝາຍ ແລະ ຊຸກຍູ້ສິ່ງເສີມການເຕີບ ໂຕສີຂຽວຂອງຂະແໜງການອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ. ວັດຖຸປະສົງພື້ນຖານຂອງນະໂຍບາຍອຸດ ສາຫະກຳສີຂຽວ ມີຄືດັ່ງນີ້:

1) ເສີມຂະຫຍາຍກອບໜ້າວຽກຂອງນະໂຍບາຍ ແລະ ລະບຽບການ ເພື່ອສະໜັບສະໜຸນການພັດທະນາອຸດ ສາຫະກຳສີຂຽວ;
2) ສົ່ງເສີມກິດຈະກຳ ການປູກຈິດສຳນຶກ ແລະ ສ້າງຂີດຄວາມສາມາດໃຫ້ແກ່ການພັດທະນາອຸດສາຫະກຳ ສີຂຽວ;
3) ສົ່ງເສີມການນຳໃຊ້ ນະວັດຕະກຳ ແລະ ເຕັກໂນໂລຊີ ເພື່ອການພັດທະນາອຸດສາຫະກຳສີຂຽວ;
4) ຊຸກຍູ້ສົ່ງເສີມການນຳໃຊ້ຊັບພະຍາກອນທຳມະຊາດ ແລະ ພະລັງງານຢ່າງມີປະສິດທິພາບ;
5) ສົ່ງເສີມການປະຢັດຕົ້ນທຶນການຜະລິດ, ເພີ່ມຜະລິດຕະພາບການຜະລິດ ແລະ ສ້າງຄວາມສາມາດໃນ ການແຂ່ງຂັນສຳລັບຜູ້ປະກອບການທັງພາຍໃນ ແລະ ຕ່າງປະເທດ;
6) ສົ່ງເສີມການປົກປັກຮັກສາສິ່ງແວດລ້ອມ.

ພາກທີ II

ອົງປະກອບຂອງອຸດສາຫະກຳສີຂຽວ

ເປົ້າໝາຍໄລຍະຍາວ ແລະ ຈຸດປະສົງຂອງນະໂຍບາຍອຸດສາຫະກຳສີຂຽວ ຈະຖືກຈັດຕັ້ງປະຕິບັດໂດຍຜ່ານ 13 ອົງປະກອບ ຂອງອຸດສາຫະກຳສີຂຽວ ຕາມຂໍ້ຕົກລົງ ວ່າດ້ວຍ ອຸດສາຫະກຳສີຂຽວ ດັ່ງນີ້:

1. ການປະຢັດພະລັງງານ

ຊຸກຍູ້ສົ່ງເສີມອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໃຫ້ປະເມີນທ່າແຮງການປະຢັດພະລັງງານ ໂດຍຜ່ານ ການກວດສອບພະລັງງານຢ່າງລະອຽດ, ສ້າງຈິດສຳນຶກໃນຂະບວນການຂອງພະລັງງານທີ່ມີປະສິດທິພາບ ແລະ ນຳໃຊ້ເຕັກໂນໂລຊີທີ່ດີທີ່ສຸດ (BAT) ເພື່ອເຮັດໃຫ້ການປະຕິບັດງານຂອງຜູ້ປະກອບການ ມີປະສິດທິພາບໃນ ການນຳໃຊ້ພະລັງງານ ແລະ ຕົ້ນທຶນ ພ້ອມດຽວກັນກັບການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ.

2. ການນຳໃຊ້ນ້ຳຢ່າງມີປະສິດທິພາບ

ຊຸກຍູ້ສົ່ງເສີມອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໃຫ້ມີການຄຸ້ມຄອງການນຳໃຊ້ນ້ຳຢ່າງມີປະສິດທິພາບ ແລະ ເໝາະສົມກັບຂະບວນການຜະລິດ ແລະ ການນຳໃຊ້ນ້ຳທີ່ວໄປໃຫ້ເກີດຜົນປະໂຫຍດສູງສຸດ ເປັນຕົ້ນ ການ ສົ່ງເສີມແນວທາງການອະນຸລັກນ້ຳ, ຕິດຕັ້ງລະບົບການນຳໃຊ້ນ້ຳຢ່າງປະຢັດ, ການໝຸນໃຊ້ນ້ຳຄືນໃໝ່.

3. ການນຳໃຊ້ພະລັງງານທົດແທນ

ຊຸກຍູ້ສົ່ງເສີມອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໃຫ້ເພີ່ມຊັດສ່ວນຂອງພະລັງງານສະອາດທີ່ຢູ່ໃນຂະ ບວນການຜະລິດ ເພື່ອປະຢັດຕົ້ນທຶນ ແລະ ຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ໂດຍການນຳໃຊ້ແຫຼ່ງພະລັງງານ ທົດແທນໃໝ່ ເປັນຕົ້ນ ໄຟຟ້ານ້ຳຕົກ, ພະລັງງານແສງຕາເວັນ, ພະລັງງານລົມ, ພະລັງງານຊີວະມວນ.

4. ການຫຼຸດຜ່ອນສິ່ງເສດເຫຼືອ

ຊຸກຍູ້ສົ່ງເສີມອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໃນການຄຸ້ມຄອງ, ຫຼຸດຜ່ອນ, ຄັດເລືອກ ປະລິມານສິ່ງ ເສດເຫຼືອຈາກການດຳເນີນທຸລະກິດ ເພື່ອຮັບປະກັນການຜະລິດສິ່ງເສດເຫຼືອໃຫ້ໜ້ອຍ ແລະ ການນຳເອົາສິ່ງເສດ ເຫຼືອມານຳໃຊ້ ແລະ ຜະລິດ ຄືນໃໝ່, ຫຼີກລ່ຽງການເຊື່ອມໂຊມຂອງສະພາບດິນ ແລະ ການນຳໃຊ້ຊັບພະຍາກອນ ໃຫ້ຄຸ້ມຄ່າທີ່ສຸດ.

5. ການປະຢັດວັດຖຸດິບ

ຊຸກຍູ້ສົ່ງເສີມອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໃຫ້ນຳໃຊ້ວັດຖຸດິບທີ່ຍືນຍົງ ໂດຍລວມເອົາການນຳໃຊ້ ວັດຖຸດິບຢ່າງມີປະສິດທິພາບ ແລະ ຫຼັກການຜະລິດທີ່ສະອາດ ເພື່ອ ພັດທະນາເຕັກນິກທາງເລືອກສຳລັບການ ຜະລິດທີ່ມີການໃຊ້ວັດຖຸດິບໜ້ອຍລົງ ແລະ ການຜະລິດທີ່ສາມາດນຳໃຊ້ສິ່ງເສດເຫຼືອມາເປັນວັດຖຸດິບສຳຮອງ.

6. ການຫຼຸດຜ່ອນມົນລະພິດທາງອາກາດ

ຊຸກຍູ້ສົ່ງເສີມອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໂດຍການນຳໃຊ້ ຫຼັກການຜະລິດທີ່ສະອາດ, ປະຢັດພະລັງ ງານ, ຄັດເລືອກເຊື້ອໄຟ ແລະ ເຕັກໂນໂລຊີໃນການບຳບັດມົນລະພິດທາງອາກາດ ເພື່ອຊ່ວຍໃນການຫຼຸດຜ່ອນ ການປ່ອຍມົນລະພິດທາງອາກາດ ແລະ ກິ່ນເໝັນ.

7. ການຫຼຸດຜ່ອນມົນລະພິດທາງນ້ຳ

ຊຸກຍູ້ສົ່ງເສີມອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໂດຍການນຳໃຊ້ ຫຼັກການຜະລິດທີ່ສະອາດ, ການນຳໃຊ້ນ້ຳຄືນຈາກຂະບວນການຜະລິດ, ຕິດຕັ້ງລະບົບອາຍກາສຊີວະພາບ ແລະ ຕິດຕັ້ງລະບົບບຳບັດນ້ຳເປື້ອນ ແລະ ນ້ຳເສຍຄຸນ ເພື່ອຫຼຸດຜ່ອນຜົນກະທົບຕໍ່ສັງຄົມ ແລະ ສິ່ງແວດລ້ອມທຳມະຊາດ ລວມທັງ ດິນ ແລະ ແມ່ນ້ຳ.

8. ການຫຼຸດຜ່ອນມົນລະພິດທາງສຽງ

ຊຸກຍູ້ສົ່ງເສີມອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໃຫ້ນຳໃຊ້ເຕັກໂນໂລຊີທີ່ມີມົນລະພິດດ້ານສຽງຕ່ຳ, ຕິດຕັ້ງລະບົບປ້ອງກັນ ແລະ ຫຼຸດຜ່ອນສຽງດັງ, ສະໜອງເຄື່ອງມືອຸປະກອນປ້ອງກັນສຽງດັງ ພ້ອມທັງສ້າງຈິດສຳນຶກໃນການນຳໃຊ້ອຸປະກອນປ້ອງກັນສຽງດັງ.

9. ການສົ່ງເສີມນະວັດຕະກຳ ເພື່ອອະນຸລັກຊີວະນາໆພັນ

ຊຸກຍູ້ສົ່ງເສີມອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໃຫ້ນຳໃຊ້ນະວັດຕະກຳໃນການປົກປັກຮັກສາຊີວະນາໆພັນ ແລະ ຊັບພະຍາກອນທຳມະຊາດເປັນອົງປະກອບທີ່ສຳຄັນເຂົ້າໃນຂະບວນການອຸດສາຫະກຳ ແລະ ຮູບແບບການບໍລິໂພກ ໃຫ້ກ້າວໄປສູ່ການຫັນປ່ຽນແບບຍືນຍົງໃນການດຳເນີນທຸລະກິດ ໂດຍການຮັບຮອງເອົາແນວທາງການປະຕິບັດທີ່ດີທີ່ສຸດ ເພື່ອຫຼີກລ່ຽງຄວາມເສຍຫາຍທີ່ບໍ່ສາມາດປ່ຽນແປງໄດ້ຕໍ່ຊີວະນາໆພັນ ແລະ ສ້າງຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ.

10. ການຟື້ນຟູສິ່ງແວດລ້ອມໂຮງງານ

ຊຸກຍູ້ສົ່ງເສີມອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໃຫ້ມີການຟື້ນຟູສິ່ງແວດລ້ອມທີ່ຖືກທຳລາຍ ຫຼື ເສື່ອມໂຊມ ທີ່ເກີດຈາກການດຳເນີນກິດຈະການໂຮງງານ ໂດຍມີການປະເມີນຜົນກະທົບດ້ານສິ່ງແວດລ້ອມ, ກຳນົດມາດຕະການແກ້ໄຂ, ໄລຍະເວລາ ແລະ ງົບປະມານ ເພື່ອໄດ້ຮັບການຟື້ນຕົວ ແລະ ປົວແປງສະພາບແວດລ້ອມໂຮງງານ ແລະ ບໍລິເວນອ້ອມຂ້າງໃຫ້ຄືນສູ່ສະພາບເດີມ.

11. ຜະລິດຕະພັນທີ່ເປັນມິດຕໍ່ສິ່ງແວດລ້ອມ

ຊຸກຍູ້ສົ່ງເສີມອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໃຫ້ມີຂະບວນການໃຊ້ວັດຖຸດິບຢ່າງມີປະສິດທິພາບ ແລະ ຫຼັກການຜະລິດທີ່ສະອາດ ເຂົ້າໃນແນວທາງໃນການຜະລິດ, ການໃຊ້ ແລະ ການກຳຈັດ ເຊິ່ງສາມາດເປັນແນວທາງການປັບປຸງໜຶ່ງທີ່ສຳຄັນ ແລະ ພັດທະນາຜະລິດຕະພັນໄປສູ່ການໄດ້ຮັບສະຫຼາກຜະລິດຕະພັນສີຂຽວ ແລະ ເປັນມິດຕໍ່ສິ່ງແວດລ້ອມ.

12. ຕ່ອງໂສ້ການສະໜອງສີຂຽວ

ຊຸກຍູ້ສົ່ງເສີມອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໃຫ້ມີແນວຄວາມຄິດທີ່ເປັນມິດຕໍ່ສິ່ງແວດລ້ອມເຂົ້າໃນການຄຸ້ມຄອງຕ່ອງໂສ້ການສະໜອງ ເພື່ອປັບປຸງຄວາມຍືນຍົງຂອງສິ່ງແວດລ້ອມ ໂດຍວິທີທາງແບບສີຂຽວ ເປັນຕົ້ນ ການຜັນຂະຫຍາຍແນວທາງສີຂຽວ, ການສະໜອງສີຂຽວ, ຂະບວນການຜະລິດສີຂຽວ, ການຈຳໜ່າຍສີຂຽວ, ການບໍລິການສີຂຽວ.

13. ການປະເມີນວົງຈອນຜະລິດຕະພັນ

ການປະເມີນວົງຈອນຜະລິດຕະພັນ ສາມາດເຮັດໃຫ້ເກີດຜົນປະໂຫຍດເພີ່ມເຕີມຕໍ່ກັບການປະເມີນດ້ານສັງຄົມ, ເສດຖະກິດ ແລະ ສິ່ງແວດລ້ອມ ເຊິ່ງມັນເປັນເຄື່ອງມືທີ່ຊ່ວຍເຜີຍແຜ່ຄວາມເຂົ້າໃຈກ່ຽວກັບການຄ້າ

ຕັ້ງແຕ່ຕົ້ນທາງ ຫາ ປາຍທາງ ທີ່ກ່ຽວຂ້ອງກັບສິ່ງແວດລ້ອມ, ສຸຂະພາບຂອງມະນຸດ ແລະ ການບໍລິໂພກຊັບພະຍາກອນ. ການປະເມີນວົງຈອນຜະລິດຕະພັນດ້ານສິ່ງແວດລ້ອມ ສາມາດປະເມີນຜົນກະທົບທີ່ກ່ຽວຂ້ອງກັບການຂຸດຄົ້ນຊັບພະຍາກອນ, ການຂົນສົ່ງ, ການຜະລິດ, ການນຳໃຊ້, ການນຳມາຜະລິດຄືນໃໝ່ ແລະ ການທຳລາຍຜະລິດຕະພັນ.

ພາກອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ຄວນມີການຊຸກຍູ້ສິ່ງເສີມໃຫ້ຈັດຕັ້ງປະຕິບັດການປະເມີນວົງຈອນດ້ານສິ່ງແວດລ້ອມ, ຄ່າໃຊ້ຈ່າຍຂອງວົງຈອນ ແລະ ການປະເມີນວົງຈອນດ້ານສັງຄົມຂອງຜະລິດຕະພັນ ສຳລັບການດຳເນີນກິດຈະການຂອງພວກເຂົາ.

ພາກທີ III

ສິ່ງທ້າທາຍ ແລະ ການລະໂອກາດ ຂອງການຫັນເປັນອຸດສາຫະກຳສີຂຽວ

1. ສິ່ງທ້າທາຍ

ໃນທົ່ວໂລກ, ການຂະຫຍາຍອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໄດ້ຕິດພັນກັບມົນລະພິດ ແລະ ການເສື່ອມໂຊມຂອງລະບົບນິເວດ. ທັງສອງອັນເປັນອັນຕະລາຍຕໍ່ສຸຂະພາບຂອງມະນຸດ ແລະ ກິດຈະກຳທາງເສດຖະກິດທີ່ອີງໃສ່ຊັບພະຍາກອນທຳມະຊາດ. ຂະບວນການອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳຈຳນວນໜຶ່ງສາມາດໄດ້ຮັບການປັບປຸງ ເຊິ່ງບໍ່ພຽງແຕ່ເພື່ອຊ່ວຍຫຼຸດຜ່ອນຄ່າໃຊ້ຈ່າຍໃນການຜະລິດທີ່ສູງຂຶ້ນເທົ່ານັ້ນ ແຕ່ຍັງຊ່ວຍຫຼຸດຜ່ອນການປ່ອຍທາດອາຍພິດເຮືອນແກ້ວ (GHG), ທາດມົນລະພິດ, ສິ່ງເສດເຫຼືອອັນຕະລາຍ ແລະ ນ້ຳເປື້ອນທີ່ຖືກປ່ອຍອອກມາໃສ່ແຫຼ່ງນ້ຳ ແລະ ທີ່ດິນ. ສິ່ງທ້າທາຍທີ່ສຳຄັນຕໍ່ໄປນີ້ ຈະຕ້ອງໄດ້ຮັບການແກ້ໄຂຕະຫຼອດໄລຍະການຈັດຕັ້ງປະຕິບັດນະໂຍບາຍ ດັ່ງລຸ່ມນີ້:

1) ໂຄງປະກອບອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ຂອງ ສປປ ລາວ ຕົ້ນຕໍແມ່ນວິສາຫະກິດຂະໜາດຍ່ອຍ, ຂະໜາດນ້ອຍ ແລະ ຂະໜາດກາງ (MSMEs) ແລະ ຄົວເຮືອນ, ເຊິ່ງຄວາມຮັບຮູ້ກ່ຽວກັບການປັບປຸງວຽກງານສີຂຽວທີ່ສາມາດເຊື່ອມສານເຂົ້າໃນຂະບວນການຜະລິດຍັງຈຳກັດ.
2) ຂະແໜງການອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ແລະ ຂະແໜງການລ້ຽງທຶນອື່ນໆ ໄດ້ສຸມໃສ່ໃນບາງຂະແໜງການ ແລະ ຂາດຄວາມຫຼາກຫຼາຍ.
3) ມີການນຳໃຊ້ເຕັກໂນໂລຊີ ແລະ ອຸປະກອນທີ່ຫຼ້າສະໄໝ ແລະ ມີການນຳເຂົ້າແບບມືສອງ.
4) ຂໍ້ຈຳກັດດ້ານງົບປະມານຂອງອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ເປັນສິ່ງຈຳກັດການດຳເນີນການ ຫຼື ການປັບປຸງອຸປະກອນສຳລັບການຮັບຮອງເອົາເຕັກໂນໂລຊີສີຂຽວ.
5) ຂໍ້ຈຳກັດດ້ານຄວາມເຂົ້າໃຈຂອງຜູ້ປະກອບການ ຕໍ່ກັບວຽກງານອຸດສາຫະກຳສີຂຽວ.
6) ລະດັບການລ້ຽງທຶນຂອງຕ່າງປະເທດຍັງຈຳກັດຢູ່ໃນຂະແໜງອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ສຳລັບກິດຈະກຳທີ່ກ່ຽວຂ້ອງກັບສີຂຽວ.
7) ກົນໄກການສະໜອງທຶນສະເພາະຈາກລັດຖະບານ, ອົງການຈັດຕັ້ງສາກົນ, ຜູ້ປະກອບການພາຍໃນ ແລະ ຕ່າງປະເທດ ຕ້ອງໄດ້ຮັບການສ້າງຕັ້ງ ເພື່ອພັດທະນາອຸດສາຫະກຳສີຂຽວ.

ລັດຖະບານແຫ່ງ ສປປ ລາວ ເນັ້ນໜັກໃສ່ ການເຊື່ອມສານເອົາຫຼັກການສີຂຽວ ແລະ ຍືນຍົງ ເຂົ້າເປັນອົງປະກອບອັນສຳຄັນຂອງຂະບວນການຂະຫຍາຍຕົວຂອງເສດຖະກິດ ແລະ ຕ້ອງມີການປະຕິບັດ ເພື່ອເລັ່ງໃສ່ການຫັນປ່ຽນເປັນອຸດສາຫະກຳສີຂຽວ.

2. ກາລະໂອກາດ

ຕໍ່ກັບການແກ້ໄຂສິ່ງທ້າທາຍດ້ານລະບົບນິເວດ, ລັດຖະບານແຫ່ງ ສປປ ລາວ ນຳໃຊ້ນະໂຍບາຍອຸດສາຫະກຳສີຂຽວ ໃຫ້ເກີດຜົນປະໂຫຍດໂດຍລວມ ເຊິ່ງບໍ່ພຽງແຕ່ສະເພາະອີງປະກອບທາງສິ່ງແວດລ້ອມເທົ່ານັ້ນ, ແຕ່ຍັງຕ້ອງເກີດຜົນປະໂຫຍດຮ່ວມໃນດ້ານສະຫວັດດີການ, ຜົນປະໂຫຍດທາງສັງຄົມ ແລະ ເສດຖະກິດ ເຊິ່ງຈະສະທ້ອນໃຫ້ເຫັນຄວາມສຳຄັນ ແລະ ກາລະໂອກາດທີ່ພົ້ນເດັ່ນຂອງຂະແໜງການ. ກາລະໂອກາດທີ່ສຳຄັນທີ່ເກີດຈາກອຸດສາຫະກຳສີຂຽວ ມີຄື:

2.1 ຫຼີກລ່ຽງການເຮັດໃຫ້ສິ່ງແວດລ້ອມເສື່ອມໂຊມ

ການພັດທະນາເສດຖະກິດແຫ່ງຊາດ ຕ້ອງບໍ່ໃຫ້ມີຜົນກະທົບ ຕໍ່ການບໍລິໂພກຊັບພະຍາກອນທຳມະຊາດ ແລະ ການເສື່ອມໂຊມຂອງສິ່ງແວດລ້ອມ. ສິ່ງນີ້ສາມາດສຳເລັດໄດ້ ໂດຍການລວມເອົາຊັບພະຍາກອນຈຳນວນໜຶ່ງ ແລະ ແນວທາງຂອງຍຸດທະສາດໃນການນຳໃຊ້ພະລັງງານໃຫ້ມີປະສິດທິພາບເຂົ້າກັນ. ການຫັນປ່ຽນຈາກຮູບແບບການຊົມໃຊ້ ແລະ ການຜະລິດທາງເສດຖະກິດ ໄປເປັນຕົວແບບເສດຖະກິດໝຸນວຽນ ສາມາດຮັບປະກັນວ່າ ສິ່ງເສດເຫຼືອຈະຫຼຸດລົງ, ຊັບພະຍາກອນຖືກນຳໃຊ້ຢ່າງມີປະສິດທິຜົນ, ສິນຄ້າສາມາດນຳໃຊ້ຄືນ ຫຼື ນຳໄປຜະລິດຄືນໃໝ່ໄດ້ຢ່າງມີມູນຄ່າເຕັມ ແລະ ການຂຸດຄົ້ນຊັບພະຍາກອນທີ່ບໍ່ໄດ້ນຳໃຊ້ຈະຖືກຈຳກັດ. ເພື່ອເຮັດໃຫ້ສຳເລັດດັ່ງທີ່ກ່າວມານັ້ນ ຈະຕ້ອງມີການປ່ຽນແປງ ໂດຍການປັບປຸງວົງຈອນຜະລິດຕະພັນ ເຊິ່ງເລີ່ມແຕ່ການອອກແບບ, ການຂຸດຄົ້ນວັດຖຸດິບ ແລະ ສືບຕໍ່ຈົນຮອດການຜະລິດ, ການຂົນສົ່ງ, ການບໍລິໂພກ ແລະ ການນຳມາໃຊ້ຄືນໃໝ່ ໃນຕອນທ້າຍຂອງວົງຈອນຜະລິດຕະພັນ. ພ້ອມກັນນັ້ນ, ລັດຖະບານສາມາດຕອບສະໜອງ ແລະ ເພີ່ມທະວີການໃຫ້ສັດຕະຍາບັນກ່ຽວກັບການປ່ຽນແປງຂອງດິນຟ້າອາກາດຕໍ່ກັບສາກົນໃນຂົງເຂດພະລັງງານ, ນ້ຳ, ສິ່ງເສດເຫຼືອ, ການອະນຸລັກຊັບພະຍາກອນ ແລະ ສະຫວັດດີການສັງຄົມ.

2.2 ການນຳໃຊ້ຊັບພະຍາກອນ ແລະ ພະລັງງານທີ່ມີປະສິດທິພາບ

ແນວທາງຂອງອຸດສາຫະກຳສີຂຽວ ຕ້ອງເອົາໃຈໃສ່ ກ່ຽວກັບ ການນຳໃຊ້ຊັບພະຍາກອນທີ່ມີປະສິດທິພາບ ແລະ ການຜະລິດທີ່ສະອາດ (RECP), ເຊິ່ງສາມາດເປັນຍຸດທະສາດ ສຳລັບບັນດາພາກອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ທີ່ມີຄວາມພ້ອມໃນລະດັບຕ່າງໆ ກ່ຽວກັບແນວທາງສີຂຽວ ແລະ ຍືນຍົງ ເພື່ອເປັນເປົ້າໝາຍໃນການແຍກການບໍລິໂພກຊັບພະຍາກອນອອກຈາກການຜະລິດ. ຈຸດປະສົງຂອງການໃຊ້ຊັບພະຍາກອນແບບມີປະສິດທິພາບ ແລະ ການຜະລິດທີ່ສະອາດ ແມ່ນເພື່ອປ້ອງກັນ/ຫຼຸດຜ່ອນການສ້າງສິ່ງເສດເຫຼືອ ແລະ ມົນລະພິດຈາກອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໂດຍການປ່ຽນແທນເພື່ອນຳມາຜະລິດຄືນໃໝ່, ຟື້ນຟູ, ຈັດການສິ່ງເສດເຫຼືອ ແລະ ມົນລະພິດທີ່ໄດ້ສ້າງຂຶ້ນ ຫຼື ປ່ອຍອອກມາສູ່ສະພາບແວດລ້ອມ.

ການພັດທະນາດ້ານປະສິດທິພາບພະລັງງານ ສາມາດໄດ້ຮັບການສະໜັບສະໜູນໂດຍນະໂຍບາຍອຸດສາຫະກຳສີຂຽວ ເຊິ່ງຍັງຈະເປັນການຊ່ວຍເສີມຂະຫຍາຍຈຸດປະສົງການຮັກສາ ແລະ ອະນຸລັກພະລັງງານແຫ່ງຊາດ. ການນຳໃຊ້ພະລັງງານຢ່າງມີປະສິດທິພາບໃນຂົງເຂດອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ຍັງສາມາດສົ່ງຜົນໃນການຫັນເປັນອຸດສາຫະກຳສີຂຽວຢູ່ ສອງ ດ້ານ ຄື:

- ດ້ານທີໜຶ່ງ: ການປະຢັດຕົ້ນທຶນ ແລະ ເພີ່ມປະສິດທິພາບການຜະລິດ ເຊິ່ງການນຳໃຊ້ພະລັງງານຢ່າງມີປະສິດທິພາບ ຈະສະແດງໃຫ້ເຫັນການປະຢັດຄ່າໃຊ້ຈ່າຍຢ່າງຫຼວງຫຼາຍຈາກການນຳໃຊ້ນ້ຳມັນເຊື້ອໄຟ ຫຼື ພະລັງງານອື່ນ. ດັ່ງນັ້ນ, ຈຶ່ງເຮັດໃຫ້ມີການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ (GHG) ຈາກການນຳໃຊ້ພະລັງງານໃນອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ.

- ດ້ານທີສອງ: ການຜະລິດທີ່ເປັນມິດກັບສິ່ງແວດລ້ອມ ກໍ່ຄື ມາດຕະຖານ ແລະ ການໝາຍປະຢັດພະລັງງານ ທີ່ສາມາດສົ່ງເສີມຜະລິດຕະພັນສີຂຽວ ແລະ ເຜີຍແຜ່ແນວທາງການປະຕິບັດທີ່ຖືກຕ້ອງໃນການຜະລິດ.

2.3 ປັບປຸງປະສິດທິພາບ ແລະ ຄວາມສາມາດໃນການແຂ່ງຂັນ ໂດຍນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ

ການລົງທຶນໃນເຕັກໂນໂລຊີສີຂຽວ ສາມາດເຮັດໃຫ້ຜົນກະທົບຕໍ່ສິ່ງແວດລ້ອມຫຼຸດລົງ ແລະ ນຳໄປສູ່ຜົນປະໂຫຍດທາງດ້ານເສດຖະກິດ ໂດຍຜ່ານການເພີ່ມປະສິດທິພາບການຜະລິດ ໃນການນຳໃຊ້ແນວທາງອຸດສາຫະກຳສີຂຽວ. ການປັບປຸງປະສິດທິພາບການຜະລິດ, ການຫຼຸດຜ່ອນການບໍລິໂພກຂອງນ້ຳ, ພະລັງງານ, ແລະ ການນຳໃຊ້ວັດສະດຸຈຳນວນຫຼາຍ, ການປັບປຸງຄວາມປອດໄພຂອງພະນັກງານ ສາມາດສົ່ງຜົນໂດຍກົງຕໍ່ລາຍຮັບ ແລະ ການຂະຫຍາຍຕົວຂອງທຸລະກິດ. ນອກຈາກນັ້ນ ການລົງທຶນໄລຍະຍາວໃນເຕັກໂນໂລຊີທີ່ສະອາດຂຶ້ນ ສາມາດຜັນຂະຫຍາຍໂດຍຜ່ານການກະຈາຍຄວາມຮູ້ ເຊິ່ງຈະນຳໄປສູ່ການພັດທະນາຜະລິດຕະພັນໃໝ່ທີ່ຈະຫຼຸດຜ່ອນການສ້າງທາດອາຍກາກບອນໃນວົງຈອນຂອງຜະລິດຕະພັນ, ຫຼຸດຜ່ອນການສ້າງສິ່ງເສດເຫຼືອ ດ້ວຍການປັບປຸງແນວທາງການນຳໃຊ້ຊັບພະຍາກອນ ແລະ ວັດສະດຸ ຕະຫຼອດຮອດການນຳເອົາສິ່ງເສດເຫຼືອກັບມາໃຊ້ໃນການຜະລິດພະລັງງານ.

ຄວາມຮັບຜິດຊອບຕໍ່ສິ່ງແວດລ້ອມບໍ່ພຽງແຕ່ຈະສ້າງຜົນກະທົບຕໍ່ການແຂ່ງຂັນຂອງອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ພາຍໃນປະເທດ. ອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ສາມາດນຳໃຊ້ເຕັກນິກຕ່າງໆ ທີ່ຫຼາກຫຼາຍເພື່ອຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ໂດຍຍັງສາມາດຮັກສາ ຫຼື ແຂ່ງຂັນໃນຕະຫຼາດຂອງສາກົນ ອີກດ້ວຍ. ພາກອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ສາມາດສືບຕໍ່ລົງທຶນໃນການຄົ້ນຄວ້າ ແລະ ການພັດທະນາດ້ານສິ່ງແວດລ້ອມ, ຮັບເອົາເຕັກໂນໂລຊີທີ່ສະອາດ, ນຳສະເໜີເຕັກໂນໂລຊີທີ່ເປັນມິດຕໍ່ລະບົບນິເວດ ແລະ ປັບປຸງຄຸນນະພາບສິ່ງແວດລ້ອມຂອງຜະລິດຕະພັນ. ມາດຕະຖານ ແລະ ການຢັ້ງຢືນສີຂຽວ ຍັງຊ່ວຍໃຫ້ທຸລະກິດສາມາດຈຳແນກສິນຄ້າຂອງພວກເຂົາຈາກຄູ່ແຂ່ງ ແລະ ສາມາດສື່ສານຄຸນນະພາບສິ່ງແວດລ້ອມ ຈາກຜະລິດຕະພັນທີ່ໄດ້ຮັບການປັບປຸງ.

ການໃຊ້ພະລັງງານຢ່າງມີປະສິດທິພາບ ຫຼື ສະຫຼາກສິນຄ້າທີ່ເປັນມິດຕໍ່ສິ່ງແວດລ້ອມ ຍັງສາມາດສ້າງການປ່ຽນແປງດ້ານພຶດຕິກຳຂອງກຸ່ມຜູ້ບໍລິໂພກ ທີ່ມີແນວຄິດໃນການເລືອກນຳໃຊ້ເຕັກໂນໂລຊີສີຂຽວ. ນອກຈາກນັ້ນ ຍີ່ຫໍ້ຂອງຜະລິດຕະພັນຂອງສາກົນ ທີ່ມີຄວາມເອົາໃຈໃສ່ດ້ານຄວາມຍືນຍົງ ຍັງສາມາດດຶງດູດໃຫ້ມີການລົງທຶນໃນຕະຫຼາດ ເຊິ່ງກໍ່ໄດ້ຮັບການຊຸກຍູ້ຈາກບັນດານະໂຍບາຍຕ່າງໆ ທີ່ສົ່ງເສີມອຸດສາຫະກຳສີຂຽວ ແລະ ຍັງເປັນການເປີດກວ້າງກາລະໂອກາດການສົ່ງອອກສຳລັບຜູ້ຜະລິດພາຍໃນ. ການສ້າງຕັ້ງນະໂຍບາຍອຸດສາຫະກຳສີຂຽວ ສາ ມາດຊ່ວຍໃຫ້ລັດຖະບານດຶງດູດການລົງທຶນ ຈາກທຸລະກິດໃນທົ່ວໂລກ ທີ່ເອົາໃຈໃສ່ດ້ານສີຂຽວ ແລະ ຍືນຍົງໃນຕ່ອງໂສ້ການສະໜອງ ແລະ ຂະຫຍາຍການສົ່ງອອກພາຍໃນ.

2.4 ປັບປຸງລະບົບນິເວດດ້ານສີມືແຮງງານ ແລະ ການຈ້າງງານ

ອຸດສາຫະກຳສີຂຽວຍັງສາມາດສົ່ງຜົນຢ່າງຫຼວງຫຼາຍຕໍ່ຕະຫຼາດແຮງງານ ເຊິ່ງສາມາດເປັນທ່າແຮງບຶ່ມຊ້ອນທີ່ຈະສ້າງວຽກເຮັດງານທຳ ແລະ ການບໍລິການແບບໃໝ່ໃນຂົງເຂດອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໃນຂະນະດຽວກັນ ກໍ່ເປັນການຫັນປ່ຽນການຈ້າງງານໃນທຸລະກິດທີ່ກໍ່ໃຫ້ເກີດມົນລະພິດ. ນະໂຍບາຍດັ່ງກ່າວນີ້ ຍັງໃຫ້ໂອກາດແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ ແລະ ຜູ້ເລີ່ມທຸລະກິດ ເພື່ອສ້າງຄວາມຮັບຮູ້, ຄົ້ນຫາແນວຄວາມຄິດປະດິດສ້າງ ແລະ ວິທີແກ້ໄຂແບບສີຂຽວ ພ້ອມທັງເປັນການສົ່ງເສີມໃຫ້ມີການເຄື່ອນຍ້າຍການຈ້າງງານອອກຈາກຂະແໜງການທຸລະກິດທີ່ບໍ່ເປັນມິດກັບສິ່ງແວດລ້ອມ ແລະ ຈະນຳໄປສູ່ການປັບປຸງທັກສະພາຍໃນ ແລະ ຄຸນນະພາບຂອງແຮງງານ.

ບັນດາຍຸດທະສາດ ໃນການພັດທະນາອຸດສາຫະກຳສີຂຽວ ປະກອບມີລະບົບນິເວດຂອງການບໍລິການຫຼາຍປະເພດ ເຊັ່ນ: ການປັບປຸງຄວາມພ້ອມດ້ານການເງິນ ຫຼື ການພັດທະນາແນວຄວາມຄິດດ້ານທຸລະກິດ ເຊິ່ງເປັນສິ່ງຈຳເປັນຕໍ່ການສົ່ງເສີມນະວັດຕະກຳແຫ່ງຊາດ ແລະ ຄວາມຫຼາກຫຼາຍ, ການປັບປຸງດ້ານທຶນ ແລະ ແຮງງານຈາກ

ການເຄື່ອນໄຫວການຜະລິດທີ່ຕ່ຳ ໄປສູ່ລະດັບສູງຂຶ້ນ ມີຄວາມປອດໄພຫຼາຍຂຶ້ນ ແລະ ປັບປຸງຄຸນນະພາບຂອງ ວຽກເຮັດງານທຳສຳລັບພະນັກງານ.

2.5 ເສີມສ້າງລະບົບນິເວດດ້ານພະລັງງານທົດແທນ

ພະລັງງານທົດແທນ ແລະ ການຫັນປ່ຽນຂະບວນການອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳໄປສູ່ແຫຼ່ງ ພະລັງງານທີ່ສະອາດຂຶ້ນ ແມ່ນເປົ້າໝາຍທີ່ສຳຄັນຂອງອຸດສາຫະກຳສີຂຽວ. ການທົດແທນແຫຼ່ງພະລັງງານທີ່ອີງ ໃສ່ນ້ຳມັນເຊື້ອໄຟ ໄປເປັນແຫຼ່ງພະລັງງານສີຂຽວ ສາມາດຮັບປະກັນວ່າບັນດາພາກສ່ວນອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ບໍ່ວ່າຈະເປັນຂະແໜງການ, ຂະໜາດ, ຫຼື ສະຖານທີ່ ສາມາດປັບປຸງປະສິດທິພາບດ້ານສິ່ງແວດ ລ້ອມຂອງເຂົາເຈົ້າຢ່າງຕໍ່ເນື່ອງ. ວິທີການແກ້ໄຂບັນຫາ ໂດຍການໃຊ້ພະລັງງານທົດແທນ ເປັນຕົ້ນ ພະລັງງານ ແສງຕາເວັນ, ພະລັງງານລົມ, ພະລັງງານຊີວະມວນ ສາມາດເຄື່ອນໄຫວຄືກັບການນຳໃຊ້ ເຕັກໂນໂລຊີ ເພື່ອ ຫຼຸດຜ່ອນທາດອາຍການກບອນ ຈາກຂະບວນການຜະລິດຂອງອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ. ນີ້ເປັນສິ່ງສຳ ຄັນທີ່ຈະກຳນົດ ແລະ ຈັດລຳດັບບູລິມະສິດຂອງເຕັກໂນໂລຊີດັ່ງກ່າວ ເພື່ອສ້າງເງື່ອນໄຂສະໜັບສະໜູນໃຫ້ແກ່ອຸດ ສາຫະກຳຕ່າງໆ ໃຫ້ເຂົ້າເຖິງແຫຼ່ງທຶນໄດ້. ການບັງຄັບໃຊ້ລະບຽບການຕ່າງໆ ກ່ຽວກັບພະລັງງານທົດແທນເຊັ່ນ: ອັດຕາພາສີ (feed-in tariffs) ແລະ ມາດຕະຖານກຳນົດສັດສ່ວນການຜະລິດດ້ວຍພະລັງງານທົດແທນ (renewable portfolio standards) ແລະ ການສົ່ງເສີມທຸລະກິດທີ່ມີຄວາມຊ່ຽວຊານໃນການຜະລິດເຕັກ ໂນໂລຊີທີ່ເປັນມິດກັບສະພາບການປ່ຽນແປງດິນຟ້າອາກາດ ເຊັ່ນ: ແຜງຜະລິດພະລັງງານແສງຕາເວັນ ແລະ ກັງ ຫັນລົມ ສາມາດຊ່ວຍສ້າງໂອກາດທີ່ສຳຄັນດ້ານເສດຖະກິດອີກດ້ວຍ.

2.6 ການຮ່ວມມືສາກົນ

ການຊ່ວຍເຫຼືອຂອງປະຊາຄົມໂລກ ໃນການອຳນວຍຄວາມສະດວກໃຫແກ່ການນຳໃຊ້ເຄື່ອງມືທາງການ ເງິນທີ່ເໝາະສົມ, ການສະໜັບສະໜູນດ້ານການຈັດຕັ້ງປະຕິບັດ ແລະ ການຖ່າຍທອດດ້ານເຕັກໂນໂລຊີທີ່ຈະເປັນ ສິ່ງສຳຄັນໃນການປ່ຽນແປງໃຫ້ປະກົດຜົນເປັນຈິງ. ການຫັນປ່ຽນສູ່ການພັດທະນາສີຂຽວສາມາດເປັນການລະໂອ ກາດທາງເສດຖະກິດທີ່ສຳຄັນ ເພື່ອພັດທະນາອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ພາຍໃນປະເທດ ໂດຍການດຶງ ດູດຄວາມສົນໃຈ ຂອງຍີ່ຫໍ້ຜະລິດຕະພັນທີ່ມີຊື່ສຽງລະດັບໂລກ. ສປປ ລາວ ຈະສ້າງການເຊື່ອມໂຍງຢ່າງແໜ້ນ ແຟ້ນກັບບັນດາປະເທດທີ່ມີເສດຖະກິດກ້າວໜ້າ ໂດຍການຮຽນຮູ້ຈາກການນຳໃຊ້ນະໂຍບາຍທີ່ປະສົບຜົນສຳ ເລັດ, ລະດົມທຶນຈາກແຫຼ່ງທຶນດ້ານການປ່ຽນແປງດິນຟ້າອາກາດ ແລະ ສີຂຽວ, ຍາດແຍ່ງການຊ່ວຍເຫຼືອດ້ານ ວິຊາການ ແລະ ທຶນຊ່ວຍເຫຼືອລ້ຳ ເພື່ອການສ້າງຂີດຄວາມສາມາດໃນການຖ່າຍທອດເອົາເຕັກໂນໂລຊີທີ່ເປັນມິດ ກັບສິ່ງແວດລ້ອມ ແລະ ການພັດທະນາຊ່ອງທາງການລົງທຶນແບບສີຂຽວ ແລະ ຍືນຍົງ ສຳລັບ ບັນດາທຸລະກິດ ຢູ່ ພາຍໃນ ແລະ ສາກົນ.

ພາກທີ IV

ກົນໄກການຜັນຂະຫຍາຍນະໂຍບາຍອຸດສາຫະກຳສີຂຽວ

1. ການເຊື່ອມສານກອບນະໂຍບາຍ

ນະໂຍບາຍອຸດສາຫະກຳສີຂຽວຂອງ ສປປ ລາວ ແມ່ນເຊື່ອມສານບັນດາຍຸດທະສາດ ແລະ ແຜນງານແຫ່ງ ຊາດທີ່ສຳຄັນ ເປັນຕົ້ນ ແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ, ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດ, ແຜນຍຸດທະສາດໃນການພັດທະນາການປ່ຽນແປງດິນຟ້າອາກາດແຫ່ງຊາດ, ບັນດານະໂຍບາຍທີ່ກ່ຽວຂ້ອງກັບ ການລົງທຶນທັງພາຍໃນ ແລະ ຕ່າງປະເທດ ແລະ ບັນດາຍຸດທະສາດຂອງຂະແໜງການທີ່ກ່ຽວຂ້ອງ.

ນອກຈາກນີ້, ຈະມີແຜນການສ້າງຍຸດທະສາດອຸດສາຫະກຳສີຂຽວແຫ່ງຊາດ ເພື່ອວາງແນວທາງແຜນຈັດຕັ້ງປະຕິບັດ ແລະ ກອບໜ້າວຽກຕ່າງໆ ເພື່ອບັນລຸເປົ້າໝາຍໄລຍະຍາວ ທີ່ວາງໄວ້ຂອງນະໂຍບາຍອຸດສາຫະກຳສີຂຽວສະບັບນີ້.

2. ສະພາບແວດລ້ອມທີ່ເອື້ອອຳນວຍ

ອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໄດ້ຮັບການສະໜັບສະໜູນ ແລະ ລາຍງານ ກ່ຽວກັບ ຜົນປະໂຫຍດ ທາງດ້ານສິ່ງແວດລ້ອມ, ສັງຄົມ ແລະ ເສດຖະກິດ ຈາກການຫັນປ່ຽນສູ່ແນວທາງປະຕິບັດສີຂຽວ ແລະ ຍືນຍົງ ເປັນຕົ້ນ ການພັດທະນາມາດຕະຖານ, ແຜນການຈັດຕັ້ງປະຕິບັດ, ການລົບລ້າງສິ່ງກີດຂວາງໃນການເຂົ້າເຖິງແຫຼ່ງ ທຶນ, ການສ້າງຄວາມຕ້ອງການ ພ້ອມທັງສິ່ງເສີມການແບ່ງປັນຄວາມຮູ້ ແລະ ນະວັດຕະກຳໃໝ່.

3. ມາດຕະຖານ ແລະ ແຜນການຈັດຕັ້ງປະຕິບັດ

ມາດຕະຖານ ແລະ ແຜນການຈັດຕັ້ງປະຕິບັດ ວ່າດ້ວຍການນຳໃຊ້ພະລັງງານຢ່າງມີປະສິດທິພາບໃນຂົງ ເຂດອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໄດ້ຖືກນຳສະເໜີ ໂດຍກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອເປັນ ການສ້າງບັນດາຫຼັກການການປະຢັດ ແລະ ອະນຸລັກພະລັງງານ ເຊິ່ງປະກອບມີ ບັນດາຂົງເຂດທີ່ສຳຄັນຂອງການ ປະຢັດ ແລະ ອະນຸລັກພະລັງງານ ແລະ ຍັງແໃສ່ມາດຕະການ ການຈັດຕັ້ງປະຕິບັດສຳລັບຂະແໜງການອຸດສາ ຫະກຳ ຢູ່ ສປປ ລາວ. ພ້ອມກັນນັ້ນ ຍັງຈະມີການຮ່າງບັນດາແຜນຈັດຕັ້ງປະຕິບັດອື່ນໆ ຕາມອົງປະກອບຕ່າງໆ ຂອງອຸດສາຫະກຳສີຂຽວ.

ນອກຈາກນີ້, ການສ້າງບັນດາມາດຕະຖານ ກ່ຽວກັບ ການຜະລິດທີ່ສະອາດ, ເປັນມິດຕໍ່ສິ່ງແວດລ້ອມ, ການຄວບຄຸມມົນລະພິດ ແລະ ການຄຸ້ມຄອງວົງຈອນຜະລິດຕະພັນ ຈະໄດ້ຮັບການຜັນຂະຫຍາຍ. ບັນດາມາດ ຕະການ ທີ່ສາມາດຈັດຕັ້ງປະຕິບັດໂດຍພາກສ່ວນອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ມີຄື ການສ້າງສະຫຼາກ ຜະລິດຕະພັນປະຢັດພະລັງງານ, ລະບົບການຄຸ້ມຄອງສິ່ງແວດລ້ອມ, ຕ່ອງໂສ້ການສະໜອງສີຂຽວ, ກິດຈະກຳ ຄວາມຮັບຜິດຊອບຮ່ວມດ້ານສັງຄົມ, ການຕິດຕາມດ້ານສິ່ງແວດລ້ອມ ແລະ ມາດຕະການອື່ນໆ ເຊັ່ນ ການ ວິເຄາະວົງຈອນຜະລິດຕະພັນ ຈະໄດ້ຮັບການຈັດຕັ້ງປະຕິບັດພາຍໃຕ້ບັນດາໂຄງການທີ່ກ່ຽວຂ້ອງ ເຊັ່ນ ການ ຂະຫຍາຍຄວາມຮັບຜິດຊອບຂອງຜູ້ຜະລິດ ແລະ ຕາມມາດຕະຖານທີ່ຈຳເປັນສຳລັບເຄື່ອຂ່າຍຕ່ອງໂສ້ການສະ ໜອງສີຂຽວ.

4. ແຫຼ່ງທຶນ ແລະ ການສ້າງຄວາມຕ້ອງການ

ສະຖາບັນການເງິນ ຈະຕ້ອງສ້າງຄວາມເຂັ້ມແຂງ ໃນການເຂົ້າເຖິງແຫຼ່ງທຶນ ເພື່ອສົ່ງເສີມກິດຈະກຳກ່ຽວ ກັບການປ່ຽນແປງດິນຟ້າອາກາດ ແລະ ການພັດທະນາສີຂຽວ ເປັນຕົ້ນ ການປ່ອຍເງິນກູ້ຢືມດອກເບ້ຍຕ່ຳ, ເງິນ ຊ່ວຍເຫຼືອລ້າ ແລະ ທຶນຕ່າງໆ ເພື່ອນຳໃຊ້ໃນການພັດທະນາໂຄງລ່າງພື້ນຖານຂອງອຸດສາຫະກຳສີຂຽວ (ການ ບຳບັດນ້ຳເປື້ອນ, ເຄື່ອງມືສຳລັບຂະບວນການນຳໃຊ້ຄືນ ແລະ ການສະໜອງພະລັງງານແບບຍືນຍົງ) ເຊິ່ງເງື່ອນີ້ຈະ ຊ່ວຍໃຫ້ມີການສົ່ງເສີມພາກທຸລະກິດ ເພື່ອເສີມສ້າງການນຳໃຊ້ເຕັກໂນໂລຊີ ແລະ ນະວັດຕະກຳໃໝ່. ບັນດາກອງ ທຶນດ້ານສິ່ງແວດລ້ອມຈະເຂົ້າມາຊ່ວຍເຫຼືອ ເພື່ອສົ່ງເສີມແນວທາງອຸດສາຫະກຳສີຂຽວ, ຊຸກຍູ້ໃຫ້ມີການສົ່ງເສີມ ແນວທາງປະຕິບັດ ທີ່ແໃສ່ມາດຕະຖານປະສິດທິພາບ ແລະ ຜ່ານການດຳເນີນງານຂອງບໍລິສັດທີ່ໃຫ້ບໍລິການ ດ້ານພະລັງງານ, ຮັບຮອງເອົາແນວທາງຮ່ວມມືສາກົນແບບສະໝັກໃຈ ທີ່ມີການຄ້າຂາຍການປ່ອຍທາດອາຍກາກ ບອນ ເຊິ່ງຈະເປັນແນວທາງທີ່ຈະຊ່ວຍໃຫ້ສາມາດບັນລຸເປົ້າໝາຍໃນລະດັບຊາດ ແລະ ສາກົນ ໃນການຫຼຸດຜ່ອນ ບັນຫາການປ່ຽນແປງຂອງສະພາບດິນຟ້າອາກາດ. ນອກຈາກນີ້, ຄວາມຕ້ອງການສິນຄ້າ ຈະມີການຂະຫຍາຍຕົວ ຂຶ້ນຢ່າງກວ້າງຂວາງໃນຕະຫຼາດໃໝ່ ແລະ ຈະຊ່ວຍປັບປຸງແນວທາງການຮັກສາສິ່ງແວດລ້ອມຂອງພາກທຸລະກິດ.

ກົນໄກການຈັດຊື້ຈັດຈ້າງສີຂຽວ ຈະຖືກນຳໃຊ້ ເພື່ອເປັນແນວທາງໃນການສ້າງຄວາມຕ້ອງການຜະລິດຕະພັນ ແລະ ການບໍລິການສີຂຽວ.

5. ການແບ່ງປັນຄວາມຮູ້ ແລະ ນະວັດຕະກຳໃໝ່

ຄວນມີການສົ່ງເສີມ ໃຫ້ເກີດຄວາມສອດຄ່ອງກັນຂອງນະໂຍບາຍ ລະຫວ່າງ ດ້ານສິ່ງແວດລ້ອມ ແລະ ນະວັດຕະກຳ. ກິດຈະກຳຕ່າງໆ ຄວນຈະມີການຈັດຕັ້ງ ເພື່ອສົ່ງເສີມການແລກປ່ຽນຂໍ້ມູນຂ່າວສານ, ໂຄງການຕົວແບບ, ການຊ່ວຍເຫຼືອດ້ານວິຊາການ, ການຝຶກອົບຮົມ ແລະ ການສະໜັບສະໜຸນການຈັດຕັ້ງ ເປັນຕົ້ນ ສູນການຜະລິດທີ່ສະອາດລາວ ແລະ ບັນດາອົງການຈັດຕັ້ງອື່ນໆ ທີ່ກ່ຽວຂ້ອງ. ຄວນຈະຕ້ອງມີການພັດທະນາໂຄງຮ່າງພື້ນຖານ ເຊັ່ນ ໜ່ວຍງານຄົ້ນຄວ້າດ້ານວິທະຍາສາດ ແລະ ເຄືອຂ່າຍໃນການຮ່ວມມືສາກົນ ເພື່ອຊຸກຍູ້ໃຫ້ມີການສົ່ງຕໍ່ຄວາມຮູ້ ແລະ ເຜີຍແຜ່ເຕັກໂນໂລຊີດ້ານສິ່ງແວດລ້ອມທີ່ທັນສະໄໝ.

ນອກຈາກນີ້ ຍັງຈະຕ້ອງໄດ້ມີການສົ່ງເສີມ ກ່ຽວກັບ ຄວາມຮັບຮູ້ຂອງຕະຫຼາດ, ການແຂ່ງຂັນ ແລະ ການສົ່ງຕໍ່ເຕັກໂນໂລຊີ ລວມທັງ ບັນດາກິດຈະກຳຄົ້ນຄວ້າ ແລະ ພັດທະນາທາງທີ່ເປັນລັກສະນະຍຸດທະສາດ ແລະ ການປະກອບການທຸລະກິດສີຂຽວ, ຜັນຂະຫຍາຍການພັດທະນາ ແລະ ຮອງຮັບເອົາເຕັກໂນໂລຊີດ້ານສິ່ງແວດລ້ອມ ໂດຍຜ່ານວິທີການຊ່ວຍເຫຼືອດ້ານການເງິນ ເຊັ່ນ: ທຶນຊ່ວຍເຫຼືອລ້າ ສຳລັບການຄົ້ນຄວ້າ ແລະ ພັດທະນາ, ການຍົນເວັ້ນພາສີ ແລະ ກອງທຶນຕ່າງໆ.

ຊຸກຍູ້ໃຫ້ມີການສົ່ງເສີມບັນດາກິດຈະກຳ ເສີມສ້າງຄວາມຮັບຮູ້, ການຝຶກອົບຮົມ, ການສ້າງຄວາມອາດສາມາດ ແລະ ໂຄງການຕົວແບບ ເພື່ອເປັນການຖ່າຍທອດຄວາມຮູ້ ແລະ ທັກສະທີ່ຈຳເປັນໃນການຈັດຕັ້ງປະຕິບັດແນວທາງອຸດສາຫະກຳສີຂຽວ ເຊິ່ງແນໃສ່ຊຸກຍູ້ບັນດາການຈັດຕັ້ງທ້ອງຖິ່ນ, ສະມາຄົມດ້ານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ແລະ ອົງການຈັດຕັ້ງຂອງຊຸມຊົນ. ນອກຈາກນີ້ ຕ້ອງມີການໃຫ້ຄວາມສຳຄັນກັບການເຜີຍແຜ່ຂໍ້ມູນຂ່າວສານ ເຊັ່ນ ການໂຄສະນາ, ການເຊື່ອມສານເຂົ້າໃນການສຶກສາ, ການນຳໃຊ້ສື່ ແລະ ການມີສ່ວນຮ່ວມຂອງສັງຄົມໃນການສ້າງນະໂຍບາຍ ແລະ ອື່ນໆ ພ້ອມກັນກັບ ການສົ່ງເສີມໃຫ້ມີກິດຈະກຳການກວດສອບພະລັງງານ ແລະ ການແບ່ງປັນກ່ຽວກັບແນວທາງການປະຕິບັດອຸດສາຫະກຳສີຂຽວຂອງຜູ້ປະກອບການໃຫ້ສັງຄົມຮັບຮູ້.

6. ເຄື່ອງມືດ້ານນະໂຍບາຍ

ເຄື່ອງມືດ້ານນະໂຍບາຍອຸດສາຫະກຳສີຂຽວ ປະກອບມີ ດັ່ງລຸ່ມນີ້:

6.1. ການຢັ້ງຢືນອຸດສາຫະກຳສີຂຽວ

ອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ສາມາດສະເໜີຂໍການຢັ້ງຢືນອຸດສາຫະກຳສີຂຽວນຳ ກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອເປັນການສະແດງໃຫ້ເຫັນຄວາມຄືບໜ້າໃນການຈັດຕັ້ງປະຕິບັດແນວທາງການຜະລິດສີຂຽວ ແລະ ຍືນຍົງ ຕາມທີ່ໄດ້ລະບຸໄວ້ໃນຂໍ້ຕົກລົງ ວ່າດ້ວຍອຸດສາຫະກຳສີຂຽວ. ການຢັ້ງຢືນອຸດສາຫະກຳສີຂຽວ ປະກອບມີ 4 ລະດັບ ດັ່ງນີ້:

- ອຸດສາຫະກຳສີຂຽວ ຂັ້ນ 1: ຈະຕ້ອງສະແດງໃຫ້ເຫັນເຖິງຄວາມມຸ່ງໝັ້ນໃນການພັດທະນາອຸດສາຫະກຳສີຂຽວ ໂດຍການສ້າງແຜນຈັດຕັ້ງປະຕິບັດສຳລັບອົງປະກອບຂອງອຸດສາຫະກຳສີຂຽວ ຢ່າງໜ້ອຍ ສາມ ອົງປະກອບ ຕາມທີ່ກຳນົດໄວ້ໃນມາດຕາ 5 ຂອງຂໍ້ຕົກລົງວ່າດ້ວຍອຸດສາຫະກຳສີຂຽວ ຫຼື ໄດ້ຮັບມາດຕະຖານສາກົນທີ່ກ່ຽວຂ້ອງກັບອຸດສາຫະກຳສີຂຽວ ເຊັ່ນ OHSAS 18001, ISO 45001 ແລະ ມາດຕະຖານອື່ນໆ ກ່ຽວກັບ ເຕັກໂນໂລຊີສີຂຽວ ແລະ ການໃຊ້ຊັບພະຍາກອນຢ່າງມີປະສິດທິພາບ.

- ອຸດສາຫະກຳສີຂຽວ ຂັ້ນ 2: ຈະຕ້ອງສະແດງໃຫ້ແຜນງານສຳລັບອົງປະກອບຂອງອຸດສາຫະກຳສີຂຽວ ຢ່າງຄົບຖ້ວນ ຫຼື ໄດ້ຮັບມາດຕະຖານສາກົນສະເພາະກ່ຽວກັບອຸດສາຫະກຳສີຂຽວ ເຊັ່ນ ISO 14001 ແລະ ISO 50001.
- ອຸດສາຫະກຳສີຂຽວ ຂັ້ນ 3: ຈະຕ້ອງສະແດງໃຫ້ເຫັນເຖິງແຜນກິດຈະກຳດ້ານສິ່ງແວດລ້ອມຢ່າງຄົບຖ້ວນ ແລະ ກາຍເປັນວັດທະນາທຳສີຂຽວ ຕາມລະບົບກົດໝາຍທີ່ກ່ຽວຂ້ອງ ເຊິ່ງແນໃສ່ ການຕິດຕາມ, ການປະເມີນ, ການກວດກາ ແລະ ການປັບປຸງ ລະບົບແນວທາງສີຂຽວຢ່າງຕໍ່ເນື່ອງ ຫຼື ໄດ້ຮັບມາດຕະຖານສາກົນດ້ານຄວາມຮັບຜິດຊອບດ້ານສັງຄົມ ເຊັ່ນ ISO 26000, ແລະ ມີການໝາຍສິນຄ້າປະຢັດພະລັງງານ ຢູ່ຜະລິດຕະພັນ.
- ອຸດສາຫະກຳສີຂຽວ ຂັ້ນ 4: ຈະຕ້ອງມີການສ້າງເຄືອຂ່າຍອຸດສາຫະກຳສີຂຽວ ໂດຍການຂະຫຍາຍການຈັດຕັ້ງອຸດສາຫະກຳສີຂຽວໄປສູ່ ພື້ນທີ່ອຸດສາຫະກຳອື່ນ ພ້ອມທັງສົ່ງເສີມເຄືອຂ່າຍໃນການຈັດຕັ້ງປະຕິບັດອຸດສາຫະກຳສີຂຽວຂັ້ນ 1 ໃຫ້ໄດ້ຢ່າງໜ້ອຍ ຫ້າສິບສ່ວນຮ້ອຍ ຂອງເຄືອຄ່າຍທັງໝົດ.

ພາຍຫຼັງທີ່ ອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໄດ້ສຳເລັດການຈັດຕັ້ງປະຕິບັດຕາມເງື່ອນໄຂ ແລະ ມາດຕະຖານ ຂອງຂໍ້ຕົກລົງວ່າດ້ວຍອຸດສາຫະກຳສີຂຽວ ຂັ້ນໃດໜຶ່ງແລ້ວ, ກົມອຸດສາຫະກຳ ແລະ ຫັດຖະກຳ ຈະອອກໃບຢັ້ງຢືນອຸດສາຫະກຳສີຂຽວໃຫ້. ອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ທີ່ໄດ້ຮັບການຢັ້ງຢືນເປັນອຸດສາຫະກຳສີຂຽວແລ້ວ ຈະໄດ້ຮັບ ເປັນຕົ້ນ ການສົ່ງເສີມໃນການພັດທະນາການໝາຍຜະລິດຕະພັນສີຂຽວ, ເຜີຍແຜ່ຜົນສຳເລັດໃນການຈັດຕັ້ງປະຕິບັດແນວທາງອຸດສາຫະກຳສີຂຽວ, ໄດ້ຮັບການຍ້ອງຍໍ ແລະ ລາງວັນດີເດັ່ນດ້ານອຸດສາຫະກຳສີຂຽວ.

6.2. ລະບົບການຕິດຕາມດ້ານສິ່ງແວດລ້ອມ

ລະບົບການຕິດຕາມກວດກາດ້ານສິ່ງແວດລ້ອມ ຈະຕ້ອງໄດ້ຮັບການປັບປຸງ ໃຫ້ສາມາດປະເມີນນະໂຍບາຍ ແລະ ການຄຸ້ມຄອງສິ່ງແວດລ້ອມ ພ້ອມທັງເປັນການກຳນົດແນວທາງໃໝ່ ເພື່ອໃຊ້ໃນການແກ້ໄຂບັນດາສິ່ງທ້າທາຍດ້ານສິ່ງແວດລ້ອມທີ່ຂະຫຍາຍຕົວຂຶ້ນ. ການພັດທະນາຕົວຊີ້ວັດ ຈະຕ້ອງໄດ້ນຳໃຊ້ການເກັບກຳຂໍ້ມູນດ້ານສິ່ງແວດລ້ອມ ທີ່ມີຄວາມຊັບຊ້ອນໃຫ້ສາມາດນຳມາວິເຄາະ ແລະ ຈັດເກັບໄດ້ຢ່າງງ່າຍດາຍ ແລະ ຍັງເປັນການສະແດງຂໍ້ມູນ ກ່ຽວກັບ ສະພາບແວດລ້ອມຂອງຂະບວນການຜະລິດ.

ນອກຈາກນີ້, ຄວນຈະຕ້ອງມີການເຊື່ອມເອົາແຜນກິດຈະກຳຕ່າງໆ ເພື່ອສົ່ງເສີມການຈັດຕັ້ງປະຕິບັດ ການສົ່ງເສີມ, ການຕິດຕາມ ແລະ ກຳນົດເຄື່ອງມືໃນການບັງຄັບໃຊ້ເຂົ້າໃນນະໂຍບາຍ. ການຕິດຕາມ ຈະຕ້ອງເນັ້ນໃສ່ບັນດາເຄື່ອງຈັກ ແລະ ກິດຈະກຳ ທີ່ເຫັນວ່າມີທ່າແຮງຈະສົ່ງຜົນກະທົບທີ່ສຳຄັນຕໍ່ສິ່ງແວດລ້ອມ ແລະ/ຫຼື ຢູ່ໃນສະຖານະການທີ່ມີການລະໂອກາດສູງ ໂດຍບໍ່ກົງກັບມາດຕະຖານທີ່ກຳນົດໄວ້. ພາກອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ຈະໄດ້ຮັບການຊຸກຍູ້ ໃຫ້ມີການສົ່ງເສີມທາງດ້ານເຕັກນິກວິຊາການ ເຊັ່ນ ການຊ່ວຍເຫຼືອດ້ານ ຂໍ້ມູນຂ່າວສານ, ການຝຶກອົບຮົມ, ເສີມຂະຫຍາຍເຕັກນິກ ແລະ ສິ່ງຈູງໃຈ ເພື່ອຈັດຕັ້ງປະຕິບັດລະບຽບການໃນການຕິດ ຕາມກວດກາສິ່ງແວດລ້ອມ.

6.3. ພາສີ ແລະ ຄ່າທຳນຽມດ້ານສິ່ງແວດລ້ອມ

ພາສີ ແລະ ຄ່າທຳນຽມດ້ານສິ່ງແວດລ້ອມ ຄວນມີການຈ່າຍພາສີດ້ານສິ່ງແວດລ້ອມ ເມື່ອມີການເຮັດໃຫ້ເກີດມົນລະພິດ ຫຼື ກິດຈະກຳທີ່ສົ່ງຜົນກະທົບຕໍ່ສິ່ງແວດລ້ອມ ຕາມກົດໝາຍ ວ່າດ້ວຍພາສີ, ລັດຖະບັນຍັດຂອງ ປະທານປະເທດ ຂອງ ສປປ ລາວ ແລະ ມາດຕະຖານດ້ານສິ່ງແວດລ້ອມແຫ່ງຊາດ ທີ່ໄດ້ກຳນົດໄວ້. ທັງນີ້ ຈຸດປະສົງ ເພື່ອເຮັດໃຫ້ຜູ້ປະກອບການໄດ້ເອົາໃຈໃສ່ໃຫ້ຄວາມສຳຄັນໃນການຈັດຕັ້ງປະຕິບັດວຽກງານອຸດສາຫະກຳສີຂຽວ ໂດຍມີມາດຕະການເພີ່ມຄ່າໃຊ້ຈ່າຍສຳລັບບັນດາກິດຈະກຳທີ່ກໍ່ໃຫ້ເກີດມົນລະພິດ, ພ້ອມທັງ ເປັນ

ການສ້າງແຮງຈູງໃຈໃຫ້ຫັນມານຳໃຊ້ທາງເລືອກທີ່ຫຼຸດຜ່ອນການປ່ອຍມົນລະພິດ ເປັນຕົ້ນ ຫຼັກການການຜະລິດທີ່ສະອາດ, ການຫຼຸດຜ່ອນການປ່ອຍມົນລະພິດ, ການຫັນມາສົ່ງເສີມຜະລິດຕະພັນທີ່ເປັນມິດກັບສິ່ງແວດລ້ອມ.

ຄ່າທຳນຽມດ້ານສິ່ງແວດລ້ອມ ຈະຕ້ອງມີການຂະຫຍາຍຂອບເຂດຂຶ້ນ ເປັນຕົ້ນ ການປະຕິບັດພັນທະຕ່າງໆ ການປັບໃໝ, ການລົງໂທດ, ການຊົດເຊີຍຄ່າເສຍຫາຍ ເຊິ່ງຈະຕ້ອງມີການນຳໃຊ້ລະບົບການຕິດຕາມ ເພື່ອຊ່ວຍໃນການຈັດຕັ້ງປະຕິບັດກົດລະບຽບ ໂດຍການລະບຸການລະເມີດ ແລະ ໃຫ້ຂໍ້ມູນເພື່ອສະໜັບສະໜຸນການບັງຄັບໃຊ້.

6.4. ເຄື່ອງມືອື່ນໆ

- **ເຄື່ອງມືດ້ານການວາງລາຄາ:** ຈະຕ້ອງມີການນຳໃຊ້ເຄື່ອງມືໃນການວາງລາຄາ ເພື່ອແນໃສ່ການດັດປັບພຶດຕິກຳຂອງຜູ້ບໍລິໂພກ ແລະ ນັກລົງທຶນໃຫ້ມີລັກສະນະຍືນຍົງ ແລະ ຍັງເປັນການຄຸ້ມຄອງການບໍລິໂພກຊັບພະຍາກອນ. ຄວນຕິດຕາມລາຄາ ຂອງວັດຖຸດິບ, ນ້ຳ, ນ້ຳມັນ ແລະ ພະລັງງານ ເພື່ອການປະເມີນຄ່າໃຊ້ຈ່າຍພາຍນອກດ້ານສິ່ງແວດລ້ອມ ແລະ ສັງຄົມ ທີ່ກ່ຽວຂ້ອງການບໍລິໂພກ.
- **ການຊື້ຂາຍທາດກາກບອນ:** ບັນດາຂະແໜງການອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ສາມາດພິຈາລະນາການເສີມສ້າງລາຍຮັບຈາກການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ໂດຍຜ່ານການຈັດຕັ້ງປະຕິບັດຕາມທິດສີຂຽວ ແລະ ຍືນຍົງ ໃນຂະບວນການຜະລິດ. ລັດຖະບານ ຈະຊຸກຍູ້ໃຫ້ເກີດການມີສ່ວນຮ່ວມຂອງພາກວິສາຫະກິດຂອງ ສປປ ລາວ ໃນຕະຫຼາດການຊື້ຂາຍທາດກາກບອນໃນລະດັບພາກພື້ນ ແລະ ສາກົນ ໂດຍການສົ່ງເສີມດ້ານກອບນະໂຍບາຍທີ່ພຽງພໍ ແລະ ບັນດາກິດຈະກຳ ເພື່ອສ້າງຄວາມຮັບຮູ້.

7. ການຕິດຕາມກວດກາ ແລະ ປະເມີນຜົນ

ກະຊວງອຸດສາຫະກຳ ແລະ ການຄ້າ ຮ່ວມກັບ ຂະແໜງການທີ່ກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນ ຈະເປັນໜ່ວຍງານຮັບຜິດຊອບໃນວຽກງານການຕິດຕາມກວດກາ ແລະ ປະເມີນຜົນຂອງນະໂຍບາຍອຸດສາຫະກຳສີຂຽວ. ກົນໄກການປະສານງານກັບບັນດາກະຊວງອື່ນໆ, ພາກລັດ ແລະ ເອກະຊົນ ຈະໄດ້ຮັບການສ້າງຕັ້ງຂຶ້ນ ເພື່ອການຮ່ວມມືສຳລັບການຈັດຕັ້ງປະຕິບັດ ໂດຍຄຳນຶງເຖິງຄວາມສອດຄ່ອງອັນສະເພາະຂອງແຕ່ລະຂະແໜງການຍ່ອຍ, ແນວທາງດ້ານທຸລະກິດຂອງພາກເອກະຊົນ ແລະ ບັນດາຂໍ້ຫຍຸ້ງຍາກອື່ນໆ.

ແນວທາງການຈັດຕັ້ງປະຕິບັດນະໂຍບາຍສະບັບນີ້ ຈະຖືກສ້າງຂຶ້ນໂດຍອີງໃສ່ຈາກຜົນໄດ້ຮັບຕົວຈິງ ເຊິ່ງປະກອບດ້ວຍແຜນງານ, ຜົນຕອບຮັບ, ຜົນກະທົບ ແລະ ຕົວຊີ້ວັດດ້ານປະສິດທິພາບທີ່ສາມາດວັດແທກໄດ້ເພື່ອຈຸດປະສົງໃນການຕິດຕາມກວດກາ, ການກຳນົດງົບປະມານຕາມແຜນງານ, ໄລຍະເວລາໃນການຄົ້ນຄວ້າ ແລະ ວິເຄາະຂໍ້ມູນ ເພື່ອການຮຽນຮູ້ຢ່າງຕໍ່ເນື່ອງ.

ເອກະສານອ້າງອີງ

- ກົດໝາຍວ່າດ້ວຍ ອຸດສາຫະກຳປຸງແຕ່ງ ສະບັບເລກທີ 48/ສພຊ, ລົງວັນທີ 27 ທັນວາ 2013;
- ກົດໝາຍວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012;
- ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດ ຂອງ ສປປ ລາວ ຮອດປີ 2030, ປີ 2019;
- ຂໍ້ຕົກລົງວ່າດ້ວຍ ອຸດສາຫະກຳສີຂຽວ, ເລກທີ 0141, ລົງວັນທີ 03 ກຸມພາ 2022.